<u>ຄະນະຜູ້ຈັດທຳ ຄຳແນະນຳສຳລັບຄຣູສອນ</u>

Copyright © 2004 by BAPTISTWAY PRESS®.
ສງວນລິກຂະສິດ

ອະນຸດຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ.  ຫ້າມ ຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ.  ຖ້າຢາກຊາບ ລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office.

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປື້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິຂະສິດຂອງປື້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ:  ເດືອນ ມີນາ, ໒004

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Coordinator, Church Health and Growth Section: H. Lynn Eckeberger
Director, Bible Study/Discipleship Center: Dennis Parrott
Publishing consultant: Ross West, Positive Difference Communications

Language Materials Team

Teaching Procedures Writer for Lesson 1- 4
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lesson 1- 4
Phaisane Somsith, Grace Baptist Church, Dallas, Texas

Teaching Procedures Writer for Lesson 6 - 10
Sidney Kahn, Saginaw Community Church, Fort Worth, Texas
Editor for Lesson 6 - 10
Phaisane Somsith, Grace Baptist Church, Dallas, Texas

Teaching Procedures Writer for Lesson 5, 11-13
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lesson 5, 11-13
Phaisane Somsith, Grace Baptist Church, Dallas, Texas

Teaching Procedures Writer for Easter Lesson
Bounheng Phongpraphan, First Lao Baptist Church, Amarillo, Texas
Editor for Easter Lesson
Phaisane Somsith, Grace Baptist Church, Dallas, Texas

Facilitator for the LAOTIAN TEAM
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 1
# ການເຜົາເຄື່ອງບູຊາຖວາຍແດ່ພຣະເຈົ້າ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ລະບຽບພວກເລວີ 1:1-3; 2:1-3; 3:1; 4:1-3ດ 13, 22-23, 27-28; 5:1-6

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ລະບຽບພວກເລວີ ບົດທີ 1 ຫາ ບົດທີ 7

**ຈຸດສຳຄັນຂອງບົດຮຽນນີ້:** ການເຜົາເຄື່ອງຖວາຍບູຊາຂອງຄົນອິສຣາເອນ ແມ່ນເຄື່ອງໝາຍໃນການຍອມຖວາຍຕົວໃຫ້ກັບພຣະເຈົ້າ, ແມ່ນການຮູ້ບຸນຄຸນຂອງພຣະເຈົ້າ, ແມ່ນການມີຄວາມສັມພັນກັບພຣະເຈົ້າ ແລະກໍແມ່ນການຊົດໃຊ້ ທີ່ຄົນເອງໄດ້ກະທຳບາບຜ່ານມາ.

**ຄຳຖາມເພື່ອສຳຣວດ:** ແມ່ນຫຍັງຄື ຫລັກການສຳຄັນ ທີ່ເຮັດໃຫ້ຄົນອິສຣາເອນ ມີການເຜົາເຄື່ອງບູຊາ?

**ຈຸດປະສົງຂອງບົດຮຽນ:** ເພື່ອຈະອະທິບາຍເຖິງການຖວາຍຂອງຊາວອິສຣາເອນແລະການຖວາຍຂອງພວກເຂົາເຫລົ່ານັ້ນ ຈະມີຜົນສະທ້ອນຫຍັງແດ່?

## ແຜນການສິດສອນ

## ນຳເຣື່ອງເຂົ້າສູ່ຊີວິດຈິງ

1. ຄຳຖາມ: ເວລາຂ້າພະເຈົ້າກ່າວວ່າ "ບໍຣິສຸດ" ແມ່ນຫຍັງຄືສິ່ງແລກທີ່ແລ່ນເຂົ້າມາຫາຄວາມຄິດຂອງທ່ານ ໃຫ້ເວລາ ເພື່ອຈະຕອບຄຳຖາມນີ້.
   ຄຳຖາມ: ແມ່ນທີ່ປະທັບໃຈທ່ານເມື່ອເຫັນຄົນບໍຣິສຸດ? ທ່ານເຄີຍຄິດບໍ່ວ່າ ທ່ານເປັນຄົນບໍຣິສຸດ? ການກ້າວໄປເປັນຄົນບໍຣິສຸດນັ້ນແມ່ນເປົ້າໝາຍຂອງທຸກຄົນ ສຳລັບ 5 ອາທິດ ຕໍ່ໄປນີ້.

2. ນຳພາຫ້ອງຮຽນເປີດປຶ້ມພຣະຄັມພີ ແລ້ວຈຶ່ງພາກັນອ່ານໄປຕາມຄຳບອກຂອງຄຣູ.

3. ໃຊ້ຂໍ້ມູນໃນຄຳແນະນຳຂອງເຈົ້າຍບົດຮຽນ ເພື່ອອະທິບາຍ ສເນີບົດຮຽນ ລະບຽບພວກເລວີ ຕິດຕາມໄປດ້ວຍການຈັດແຈງຂອງປຶ້ມນີ້

4. ຄຳຖາມ: ເປັນຫຍັງພວກເຮົາຈຶ່ງມີການຖວາຍຊັບທຸກຄັ້ງໃນເວລານະມັສການ? (ບາງຄົນອາດຕອບວ່າ: ເພື່ອຊ່ວຍອາຈານ, ເພື່ອຊ່ວຍການບໍຣິຫານຄຣິສຕະຈັກ, ຊ່ວຍການປ່າວປະກາດ......)
   ບົກຮຽນວັນນີ້ ເພື່ອໃຫ້ພວກເຮົາເຫັນ ເຫດຜົນທີ່ພຣະເຈົ້າຊົງຕັກເຕືອນຄົນອິສຣາເອນຢ່າງໃດໃນການຖວາຍ?

## ນຳພາສຶກສາພຣະຄັມພີ

5. ໃຊ້ຊອງຖວາຍຂອງໂບດ 5 ຊອງ ແຕ່ລະຊອງໃຫ້ຕັດເຈັ້ຍຂນາດໃບເງິນ ແຕ່ລະໃບນັ້ນໃຫ້ຂຽນຂໍ້ພຣະຄັມພີລົງໄປ.
   ກ. ລະບຽບພວກເລວີ 1:1-17
   ຂ. ລະບຽບພວກເລວີ 2:1-16

ຄ. ລະບຽບພວກເລວີ 3:1-17

ງ. ລະບຽບພວກເລວີ 4:1-12

ຈ. ລະບຽບພວກເລວີ 5: 14-19

ຢາຍຊອງໜັງສືນີ້ໃຫ້ ຫ້ອງຮຽນ ເວລາເປີດອ່ານແລ້ວ ໃຫ້ຕຽມຫາຄໍາຕອບໄວ້.

6. ກ່ອນຈະອ່ານຄໍາສັ່ງນີ້ ໃຫ້ຫ້ອງຮຽນຄົ້ນຄວ້າຫາຄໍາຕອບ ໃນຄໍາຖາມຕໍ່ໄປນີ້:

ການຖວາຍນັ້ນຊື່ວ່າຢ່າງໃດ? (ການຖວາຍເພື່ອລຶບລ້າງບາບ......)

ຈຸດປະສົງຂອງການຖວາຍຄືຫຍັງ?

ສິ່ງທີ່ຈະນໍາມາຖວາຍນັ້ນຄືຫຍັງ?

ເອີ້ນໃຫ້ຕອບ ຫລັງຈາກອ່ານຂໍ້ພຣະທັມແລ້ວ.

(ເຜົາ) ການຖວາຍສັດທີ່ບໍ່ມີມົນທິນນັ້ນມີຄວາມໝາຍຢ່າງໃດ?

(ເມັດພືດ) ການຖວາຍນີ້ ເປັນຫຍັງຈຶ່ງປະກອບດ້ວຍເກືອ ແຕ່ບໍ່ມີ ເຊື້ອແປ້ງ.

(ມິດພາບ) ເປັນຫຍັງການເຜົາບູຊາຈຶ່ງມາກ່ອນ?

(ຄວາມບາບ) ແມ່ນຫຍັງຄືບາບທີ່ບໍ່ໄດ້ຕັ້ງໃຈ?

(ຄວາມຜິດ) ທ່ານຍັງຈໍາໄດ້ບໍ່ ເວລາທ່ານເວົ້າຜິດ ຫລືເຮັດອັນໃດອັນນຶ່ງຜິດ?

(ຄຣູຈະອະທິບາຍແຕ່ລະຂໍ້)

## <u>ນໍາມາໃຊ້ໃນຊີວິດປະຈໍາວັນ</u>

7. <u>ຄໍາຖາມ</u>: ທ່ານຄິດຢ່າງໃດ ເວລາທ່ານຂຽນເຊັກ ຖວາຍໃຫ້ແກ່ໂບດ?

"ຄົນຂອງພຣະເຈົ້າ ຈະໂຄຣົບນັບຖື ແລະໃຫ້ກຽດພຣະອົງ (1:1-17; 6:8-13)."

<u>ຄໍາຖາມ</u>: ທ່ານໃຫ້ການຖວາຍຢ່າງໃດ ໃນເວລາທ່ານນະມັສການພຣະເຈົ້າ? ທ່ານສະແດງຕົວໃນການຖວາຍໃຫ້ພຣະຄຣິດຢ່າງໃດ?

8. ເຊີນທຸກຄົນໃນຫ້ອງຮຽນກົ້ມຫົວໃຫ້ກັບພຣະເຈົ້າ. ທ້າທາຍຫ້ອງຮຽນ ໃຫ້ຖາມຕົນເອງ: ຂ້ອຍຄວນຈະໃຫ້ການຖວາຍດີຂຶ້ນບໍ່, ຫລືຂ້ອຍຄວນຈະເຮັດຢ່າງໃດ?

9. ປິດຫ້ອງຮຽນດ້ວຍການອະທິຖານ ແລະຊ່ວຍໃຫ້ເຮົາໄດ້ຖວາຍແນວຄິດຈິດໃຈໃຫ້ກັບພຣະເຈົ້າ.

ສຈ. ບຸນໂຮມ ພົມມະຈັນ

# ຄຳແນະນຳສຳລັບຄຣູສອນ
## ບົດຮຽນທີ 2
## ຈົ່ງຮັບເອົາການອະພັຍໂທດຈາກພຣະເຈົ້າ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ລະບຽບພວກເລວີ 16:11-22; 29-34

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ລະບຽບພວກເລວີ 16:1-34; 23:26-32

**ຈຸດສຳຄັນຂອງບົດຮຽນນີ້:** ພິທີລົບລ້າງມົນທິນ ໃນວັນລົບລ້າງບາບນັ້ນ ສຳແດງອອກເຖິງການໄດ້ຮັບການອະພັຍໂທດຈາກພຣະເຈົ້າ.

**ຄຳຖາມເພື່ອສຳຣວດ:** ການອະພັຍໂທດຈາກພຣະເຈົ້າ ມາສູ່ມວນມະນຸດພວກເຮົາຢ່າງໃດ?

**ຈຸດປະສົງຂອງບົດຮຽນ:** ເພື່ອຊີ້ໃຫ້ເຫັນເຫດການໃນວັນລົບລ້າງບາບ ແລະ ເຫດການນັ້ນມີຄວາມສັມພັນຕໍ່ການອະພັຍບາບໃນພຣະເຢຊູຄຣິດ.

## ແຜນການສິດສອນ

## ນຳເຣື່ອງເຂົ້າສູ່ຊີວິດຈິງ

1. ຂຽນລົງໃສ່ໃນກະດານສີຂາວ ຫລືເຈັ້ຍ ໂປສເຕີ້ ລຳດັບບົດຮຽນ. ໃຫ້ປິດໄວ້ ແລ້ວຄ່ອຍເປີດໄປທີລະອັນ.

ຈົ່ງຮັບການອະພັຍຂອງພຣະເຈົ້າ

- ການຊຳຣະລ້າງປະໂລຫິດ (16:11-14)
- ການຊຳຣະລ້າງປະຊາຊົນ (16:15, 20-22)
- ການຊຳຣະລ້າງສະຖານທີ່ສັກສິດ (16:16-20)
- ການຮ່ວມສລອງວັນລົບລ້າງມົນທິນ (16:29-34)
- ການຊຳຣະລ້າງໃນພຣະຄັມພີໃຫມ່

2. ນຳຮູບເຈັ້ຍ ທີ່ຕັດຕຽມໄວ້ແລ້ວຈາກຫນັງສືພິມ, ຮູບວັນເກີດ, ຮູບຣົດໃຫມ່, ຮູບແຕ່ງງານ, ຮູບຈົບໂຮງຮຽນ, ຮູບເຮືອນ, ຮູບເດັກເກີດໃຫມ່....... ຊີ່ງຂຽນໄວ້ຂ້າງເທິງວ່າ "ວັນພິເສດຂອງຂ້ອຍແມ່ນ....... ຖາມນັກຮຽນໃຫ້ ຕໍ່ໄປປໂຍກນີ້ຈົນຈົບ.

- ຖ້າມີຜູ້ໃດຜູ້ນຶ່ງຫາກກ່າວມາວ່າ ວັນພິເສດຂອງຂ້ອຍແມ່ນວັນທີ່ຂ້ອຍເຂົ້າມາເປັນຄຣິສຕຽນ, ກ່າວຄືຖ້າພວກເຮົາຫາກອ່ານໃນພຣະທັມຂອງພຣະເຈົ້າໃນວັນນີ້, ສົມທຽບວັນທີ່ທ່ານໄດ້ຮັບຄວາມລອດ ກັບວັນພັກໃຫຍ່ຂອງຊາວອິສຣາເອນ (ວັນລົບລ້າງບາບ).
- ຖ້າບໍ່ມີຜູ້ໃດກ່າວເຖິງວັນໄດ້ຮັບຄວາມລອດຂອງພວກເຂົາ, ກ່າວຄື ຖ້າໃຜຜູ້ນຶ່ງຫາກບອກທ່ານວ່າຄວາມບາບຂອງທ່ານປີທີ່ຜ່ານມາໄດ້ຖືກລົບລ້າງແລ້ວ, ທ່ານຈະຄິດວ່າຢ່າງໃດ? ນີ້ແມ່ນການຈັດຕຽມຂອງພຣະເຈົ້າ ສຳລັບຄົນອິຣາເອນ ໃນວັນລ້າງບາບຂອງພວກເຂົາ.

## ນຳພາການສຶກສາພຣະຄັມພີ

3. ປາທະກະຖາສັ້ນໆ ໂດຍໃຊ້ຄຳແນະນຳ ໃນເຈັ້ຍບົດຮຽນພຣະຄັມພີ ຢ່າລືມວ່າ ຕ້ອງກວມລວມໄປເຖິງ

3 ຈຸດນີ້: ການຕ້ອງການຈອະພັຍໂທດ, ສະຖານທີ່ຈະຖວາຍ, ແລະຄວາມຫມາຍຂອງການລົບລ້າງບາບ.

4. ໃນກະດານຫລືເຈັ້ຍໂປສເຕີ້ ໃຫ້ເປີດອອກ, ເອີ້ນໃຫ້ນັກຮຽນ ອ່ານ ລະບຽບພວກເລວີ 16:11-14. ອະທິ ບາຍສັ້ນໆ ເຖິງການກະທຳຂອງອາໂຣນ. ແລ້ວຖາມວ່າ ເປັນຫຍັງອາໂຣນຜູ້ເປັນປະໂຣຫິດຈຶ່ງຕ້ອງກະທຳເທສການ ລ້າງບາບຢ່າງນີ້? (ລາວເປັນມະນຸດເຫມືອນພວກເຮົາທຸກຄົນ ລາວກໍຕ້ອງມີບາບເຫມືອນກັບເຮົາ.)
<u>ຄຳຖາມ</u>: ເຮົາຈະເຮັດຢ່າງໃດເພື່ອຈະຊ່ວຍຜູ້ນຳຂອງພວກເຮົາ ໃຫ້ເປັນຜູ້ທີ່ພຣະເຈົ້າຕ້ອງການໄດ້?

5. ໃຫ້ມາເບິ່ງໃນຈຸດທີສອງຂອງບົດຮຽນ. ອະທິບາຍເຣື່ອງແກະສອງໂຕ, ໂດຍໃຊ້ເຈັ້ຍບົດຮຽນເປັນບ່ອນອີງ. <u>ຄຳຖາມ</u>: ທ່ານເຄີຍຄິດບໍ່ວ່າທ່ານເປັນແກະທີ່ຮັບບາບ? ເປັນຫຍັງທ່ານຈຶ່ງຄິດຢ່າງນັ້ນ?

6. ຈຸດທີສາມຕໍ່ໄປ ເອີ້ນໃຫ້ນັກຮຽນອ່ານບົດຮຽນ ລະບຽບພວກເລວີ 15:31. ເປັນຫຍັງສະຖານທີ່ບໍຣິສຸດຈຶ່ງຕ້ອງໄດ້ຖືກຊຳຣະລ້າງ? ມີທາງໃດແດ່ທີ່ ພວກເຮົາຈະສຳແດງເຖິງການບໍ່ໂຄຣົບນັບຖື ໃນສະຖານທີ່ນະມັສການ?

7. ໃຫ້ນັກຮຽນອ່ານ ໃນຈຸດທີສີ່. ຄົນອິສຣາເອນຈະໃຊ້ວັນລົບລ້າງບາບຢ່າງໃດ? (ພັກຜ່ອນ, ອົດອາຫານບໍ່ທຳງານອັນໃດທັງຫມົດ) ເປັນຫຍັງວັນຢຸດພັກນີ້ຈຶ່ງເປັນວັນຍິ່ງໃຫຍ່ຂອງພວກເຂົາ?

8. ມາເຖິງຈຸດສຸດທ້າຍຂອງວັນນີ້ ໃຫ້ຄຣູອະທິບາຍສັ້ນໆ (ເບິ່ງເຈັ້ຍບົດຮຽນພຣະຄັມພີ)
<u>ຄຳຖາມ</u>: ທ່ານຄິດວ່າວັນລົບລ້າງບາບມີຜູ້ຄົນເຊື່ອຖືຫລາຍບໍ່ ໃນທຸກວັນນີ້? ເປັນຫຍັງ?

9. ຊວນນັກຮຽນໃນຫ້ອງຮຽນໃຫ້ກົ້ມຫົວ ແລະຫລັບຕາ ແລ້ວກໍໃຫ້ສລູບຄຳຖາມພວກນີ້: ມີສິ່ງໃດທີ່ເຮັດໃຫ້ທ່ານມີຄວາມຫຍຸ້ງຍາກ ໃນການຮັບອະພັຍໂທດຈາກພຣະເຈົ້າ? ທ່ານເຄີຍຄິດບໍ່ ເວລາທ່ານເຫັນວ່າ ຖືກແລ້ວ ດີແລ້ວ ແຕ່ທ່ານບໍ່ໄດ້ເຮັດ? ທ່ານມີຄວາມຮູ້ສຶກຢ່າງໃດ? ທ່ານໄດ້ນຳຄວາມບາບຂອງທ່ານມາຖວາຍພຣະເຈົ້າບໍ່? ທ່ານເຄີຍມີປະສົບການໃນການໃຫ້ອະພັຍຢ່າງໃດ? ຖ້າທ່ານບໍ່ເຄີຍໄດ້ຮ້ອງຂໍພຣະເຈົ້າໃຫ້ອະພັຍທ່ານຈັກເທື່ອ ໃນວັນນີ້ທ່ານຈະສາມາດເຮັດໄດ້ບໍ່ ເພາະວັນນີ້ເປັນວັນຍິ່ງໃຫຍ່ຂອງພຣະເຈົ້າ.

ສຈ. ບຸນໂຮມ ພົມມະຈັນ

ຄຳແນະນຳສຳລັບຄຣູສອນ

ບົດຮຽນທີ 1

ຈົ່ງບໍຣິສຸດໃນທຸກຄວາມສັມພັນ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ລະບຽບພວກເລວີ 19:1-4, 9-18, 33-35

ຂໍ້ພຣະຄັມພີສຳລັບເບື້ອງຫລັງ: ລະບຽບພວກເລວີ 19

ຈຸດສຳຄັນຂອງບົດຮຽນນີ້: ຄົນຂອງພຣະເຈົ້າຕ້ອງດຳເນີນຊີວິດທີ່ບໍຣິສຸດ ໃນຄວາມສັມພັນທຸກກໍຣະນີ ແລະທຸກສະພາບແວດລ້ອມ.

ຄຳຖາມເພື່ອສຳຣວດ: ຂອບເຂດກວ້າງໄປເຖິງໃສ ທີ່ພຣະເຈົ້າຊົງສັ່ງໃຫ້ບໍຣິສຸດ?

ຈຸດປະສົງຂອງບົດຮຽນ: ຈົ່ງຂຽນລົງວ່າຄົນຂອງພຣະເຈົ້າຄວນດຳເນີນຊີວິດທີ່ບໍຣິສຸດຢ່າງໃດ ແລະການສະແດງອອກຂອງຄຣິສຕຽນທຸກວັນນີ້.

## ແຜນການສິດສອນ

### ນຳເຂົ້າສູ່ຊີວິດຈິງ

1. ໃຫ້ຂຽນໃສ່ກະດານ "ທີ່ຈະບໍຣິສຸດນັ້ນຫມາຍຄວາມວ່າ......" ຄຳຖາມ: ເວລາທ່ານຍັງເປັນເດັກຢູ່, ເມື່ອໄດ້ຍິນຄຳວ່າ "ຕ້ອງບໍຣິສຸດ" ແມ່ນຫຍັງຈະແລ່ນເຂົ້າມາສູ່ເສັ້ນປະສາດກ່ອນຫມູ່? (ເຂົາຈະກ່າວເຖິງອາຈານຫລືຜູ້ນຳຜູ້ທີ່ຖືພຣະຄັມພີຫົວໃຫຍ່ກວ່າຫມູ່, ຜູ້ທີ່ນຸ່ງຊຸດໃຫຍ່, ຜູ້ທີ່ອະທິຖານຍາວຢຽດ, ຜູ້ທີ່ອະທິຖານດັງໆ, ຜູ້ທີ່ກ່າວຄຳວ່າ ອາແມນ ເລື້ອຍໆ ໃນເວລານະມັສການ) ໃນວັນນີ້ ຄວາມຫມາຍຂອງຄຳວ່າ "ບໍຣິສຸດ" ສຳລັບທ່ານຄືຫຍັງ? ໃຫ້ເວລາຈັກຫນ້ອຍນຶ່ງ ເພື່ອຈະໄດ້ຄຳຕອບທີ່ດີໆ. ໃຫ້ເບິ່ງໃນເຈັ້ຍບົດຮຽນ, ຄຣູຈະອະທິບາຍສັ້ນໆ ໃນຄຳແນະນຳການສິດສອນ. ແລ້ວກໍສເນີບົດຮຽນສຳລັບວັນນີ້.

### ສຶກສາພຣະຄັມພີ

2. ອ່ານພຣະທັມ ລະບຽບພວກເລວີ 19:1-3 ແລ້ວວາງຄຳຖາມ: ເວລາໃດທີ່ເປັນການຍາກໃນການໂຄຣົບບິດາມານດາ? ທ່ານຈະສຳແດງຄວາມໂຄຣົບນັບຖືຕໍ່ບິດາມານດາຜູ້ທີ່ເຮັດໃຫ້ທ່ານເຈັບແຄ້ນ? ຫລັງຈາກທີ່ ສົນທະນາເຣື່ອງການໂຄຣົບນັບຖືພໍ່ແມ່ແລ້ວກັນ. ໃຫ້ນັກຮຽນຄົນນຶ່ງອ່ານ ອົພຍົບ 20:8 ແລະພຣະບັນຍັດສອງ 5:13-14. ຄຳຖາມ: ແມ່ນຫຍັງທີ່ພວກເຮົາຄວນຮຽນຕື່ມໃນວັນສະບາໂຕໃນຂໍ້ຄວາມນີ້? (ຄວນຈະເປັນ "ບໍຣິສຸດ")

3. ອ່ານ ລະບຽບພວກເລວີ 19:4. ອະທິບາຍຄຳວ່າ "ຮູບໂຄຣົບ" ໃນເຜົ່າເຮັບເຣີ ໃຊ້ຄຳອະທິບາຍ ໃນເຈັ້ຍບົດຮຽນພຣະຄັມພີ ແລ້ວຖາມວ່າ: ທຸກວັນນີ້ ພວກເຮົາຍັງກາບໄຫວ້ຮູບໂຄຣົບຢູ່ບໍ່?

4. ອ່ານ ລະບຽບພວກເລວີ 19:9-10 ຖາມ: ມີບາງຄົນທີ່ໄດ້ຮັບຜົນປໂຍດຈາກທ່ານຫລືບໍ່? ໃນທຳ

ນອງດຽວກັນ, ທ່ານຈະຮູ້ສຶກຢ່າງໃດ ເມື່ອທ່ານຫາກເຫັນຄົນທີ່ຕ້ອງການຊ່ວຍເຫລືອ?

5. ອ່ານ ລະບຽບພວກເລວີ 19:11-12. ຄຳຖາມ: ແມ່ນຫຍັງຄືລັກສະນະຂອງຄວາມບໍຣິສຸດທີ່ພັນລະນາໃຫ້ເຫັນໃນຕອນນີ້?

6. ອ່ານ ລະບຽບພວກເລວີ 19:13 ອະທິບາຍເຖິງຄວາມຕ້ອງການທີ່ຈະປະຕິບັດຕໍ່ ເພື່ອນບ້ານແລະລູກຈ້າງ.

7. ອ່ານ ລະບຽບພວກເລວີ 19:14 ຖາມ: ຄຣິສຕະຈັກຂອງພວກເຮົາ ໄດ້ຈັດຕຽມຫຍັງແດ່ ເພື່ອທີ່ຈະຊ່ວຍຄົນເສັຍອົງຄະ? (ຄົນຫູຫນວກ, ຕາບອດ, ປາກກືກ.....)

8. ອ່ານລະບຽບພວກເລວີ19:15-18 ຖາມ: ການສັມພັນກັບເພື່ອນບ້ານຂອງພວກເຮົາຄວນຈະເປັນຢ່າງໃດ? ພຣະເຢຊູກ່າວວ່າ ຜູ້ໃດຄືເພື່ອນບ້ານຂອງເຮົາ? (ລູກາ 10:29-37)

9. ອ່ານ ລະບຽບພວກເລວີ19 : 32 ຖາມ: ໃນສັງຄົມຂອງພວກເຮົາ ມີການໂຄຣົບຜູ້ທີ່ມີອາຍຸສູງຫລືບໍ່?

10. ອ່ານ ລະບຽບພວກເລວີ19:33-34 ພວກເຮົາເຄີຍເຫັນຄົນຕ່າງຊາດຖືກຢຽບຫຍາມບໍ່ໃນສັງຄົມຂອງພວກເຮົາ? ເມື່ອເຫັນດັ່ງນັ້ນ ທ່ານເຮັດຢ່າງໃດ? ທ່ານຄວນຈະເຮັດຢ່າງໃດ? ເຮົາຄວນຈະປະຕິບັດຢ່າງໃດກັບພວກເຂົາ?

11. ອ່ານລະບຽບພວກເລວີ19:35-37 ຖາມ: ເຮົາຄວນຈະນຳມາໃຊ້ໃນກິຈການຸຄ້າຂອງພວກເຮົາຢ່າງໃດ?

## ຄຳຫນູນໃຈສຳລັບວັນນີ້:

12. ນຳມາໃຊ້ໃນຊີວິດປະຈຳວັນ ໂດຍໃຊ້ຄຳສະລູບ. "ຕ້ອງບໍຣິສຸດ" ໃນເຈັ້ຍບົດຮຽນ
ຖາມ: ທ່ານສາມາດໃຫ້ຕົວຢ່າງໄດ້ແດ່ບໍ່ກ່ຽວກັບຄວາມບໍຣິສຸດໃນຊີວິດຂອງທ່ານ?
ຫລັງຈາກທີ່ຮຽນບົດຮຽນນີ້ແລ້ວ, ສິ່ງນຶ່ງທີ່ຄວນຈະປ່ຽນແປງໃນຊີວິດຂອງທ່ານຄືຫຍັງ?

ສຈ. ບຸນໂຮມ ພົມມະຈັນ

# <u>ຄຳແນະນຳສຳລັບຄຣູສອນ</u>

## <u>ບົດຮຽນທີ 4</u>

## <u>ຢູ່ຢ່າງໜ້າໂຄຣົບນັບຖື</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ລະບຽບພວກເລວີ 23:1-38

<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u> ລະບຽບພວກເລວີ 23

<u>ຈຸດສຳຄັນຂອງບົດຮຽນນີ້:</u> ຄົນຂອງພຣະເຈົ້າຕ້ອງມີລະບຽບວິນັຍປະຈຳອາທິດ ແລະຕາມລະດູການໃນຊີວິດຂອງເຂົາ ເພື່ອເພີ້ມພູນຄຸນຄ່າໃນຄວາມສັມພັນກັບພຣະເຈົ້າ ແລະເພື່ອນມະນຸດດ້ວຍກັນ.

<u>ຄຳຖາມເພື່ອສຳຣວດ</u>: ຖ້າພວກເຮົາຫາກຮູ້ວ່າ ເວລາເປັນສິ່ງສັກສິດ ທ່ານຈະດຳເນີນຊີວິດຢ່າງໃດ?

<u>ຈຸດປະສົງຂອງບົດຮຽນ:</u> ເພື່ອຈະໃຫ້ເຫັນຫລັກການຂອງການສເລີມສລອງຂອງຄົນເຮັບເຣີ ແລະສະແດງລະບຽບວິນັຍ ເພື່ອເພີ້ມພູນຄວາມສັມພັນກັບພຣະເຈົ້າແລະເພື່ອນມະນຸດ.

## <u>ແຜນການສິດສອນ</u>

## <u>ນຳເຣື່ອງເຂົ້າສູ່ຊີວິດຈິງ:</u>

1. ສະແດງຮູບຕ່າງໆກ່ຽວກັບວັນພັກຕ່າງໆ. ການເອີ້ຂອງແຕ່ລະລະດູການກໍບໍ່ເຫມືອນກັນ.
   ຖາມ: ທ່ານມັກລະດູພັກ ຍາມໃດຫລາຍກວ່າຫມູ່? ເປັນຫຍັງ?
   ຖາມ: ຣະດູການພັກ ຕາມປະເພນີ ຈະເຮັດໃຫ້ຄອບຄົວຂອງທ່ານມີຄຸນຄ່າຢ່າງໃດ? (ວັນນີ້ຈະໄດ້ສຶກສາກ່ຽວກັບວັນພັກ ທີ່ພຣະເຈົ້າຊົງຈັດຕຽມໄວ້ເພື່ອຄົນເຮັບຣີ.)
   ໃຫ້ພວກເຮົາມາເບິ່ງຫລັກການທີ່ສຳຄັນ ທີ່ຈະເພີ້ມຄວາມສັມພັນກັບພຣະເຈົ້າ ແລະກັບຄົນທົ່ວໄປ.

<u>ນຳພາສຶກສາພຣະຄັມພີ</u>

2. ປາທະກະຖາສັ້ນໆ ກ່ຽວມາຕຖາມຂອງຄວາມບໍຣິສຸດ, ຈຸດປະສົງ, ແລະເປັນຫຍັງພວກເຮົາຈິ່ງຮຽນໃນວັນນີ້. ໃຊ້ ລະບຽບພວກເລວີ 23:1-2 ເພື່ອເປັນຄຳແນະນຳ.

3. ວັນພິເສດ ອັນແລກທີ່ພຣະເຈົ້າຊົງສະຖາປະນາຂຶ້ນ ແມ່ນວັນສະບາໂຕ.
   ເອີ້ນນັກຮຽນຄົນນື່ງໃຫ້ອ່ານ ລະບຽບພວກເລວີ 23:3 ແລະ ອົພຍົບ 20:8-11. ໃຊ້ຄຳຖາມເຫລົ່ານີ້ເພື່ອນຳພາການສົນທະນາ :
   - ແມ່ນຫຍັງຄືສິ່ງທີ່ຕ້ອງຫ້າມໃນວັນສະບາໂຕ ໃນພຣະຄັມພີເດີມ? (ວຽກງານ, ພຣະບັນຍັດສອງ 5:14 ແລະການເຄື່ອນໄຫວການຄ້າ, ເນເຫມີຢາ 10:31)
   - ວັນທີ່ເຮົາຈະຮ່ວມພິທີນັ້ນແມ່ນວັນຢ່າງໃດ? (ອ່ານ ເອຊາຢາ 58:13-14) ອະທິບາຍວ່າຄົນເຮັບເຣີ ເຂົາທຳພິທີຢ່າງໃດ ແລະມີຄວາມຫມາຍຢ່າງໃດແກ່ພວກເຂົາ.
   - ອົງພຣະເຢຊູກ່າວຢ່າງໃດແກ່ວັນສະບາໂຕ? (ມາຣະໂກ 2:27)

- ອົງພຣະເຢຊູເຮັດຫຍັງແດ່ໃນວັນສະບາໂຕ? (ມາຣະໂກ 2:23--3:4)
- ທ່ານຈະທຳຢ່າງໃດ ເພື່ອຈະເຮັດໃຫ້ວັນສະບາໂຕເປັນວັນພັກຜ່ອນ?

4. ອະທິບາຍວ່າ ແຕ່ລະວັນຢຸດທີ່ພຣະເຈົ້າມອບໃຫ້ຄົນເຮັບເຮິປະຕິບັດນັ້ນ ແມ່ນມີໄລຍະກັນລະຫວ່າງການເກັບກ່ຽວ. ແບ່ງໃຫ້ນັກຮຽນ ແລ້ວບອກໃຫ້ນັກຮຽນຂີດກ້ອງໃນເທສການທີ່ພົບເຫັນ. ໃຫ້ອະທິບາຍແຕ່ລະເທສການແບບຫຍໍ້ໆ.
   - ເທສການປັສຄາ ລະບຽບພວກເລວີ 23:4-5 ; ອົພຍົບ 12:1-14 ເທສການນີ້ສຳຄັນຢ່າງໃດໃນພຣະຄັມພີໃໝ່? (ມທ 26:17)
   - ງານລ້ຽງເທສການກິນເຂົ້າຈີ່ບໍ່ມີເຊື້ອ ລະບຽບພວກເລວີ 23:6-8; ອົພຍົບ 12:17-20
   - ເທສການເກັບກ່ຽວຜົນແລກ ລະບຽບພວກເລວີ 23:9-14
   - ງານລ້ຽງວັນສະບາໂຕ ຫລື ງານລ້ຽງປະຈຳອາທິດ ຫລືວັນເພັນເຕຄອສ ລະບຽບພວກເລວີ 23:15-22; ອົພຍົບ23:16 ຫລັງຈາກປາທະກະຖາແລ້ວ ຖາມ: ວັນເພັນເຕຄອສມີຄວາມສຳຄັນຢ່າງໃດໃນພຣະຄັມພີໃໝ່? ກິຈການ ບົດທີ 2
   - ເທສການສຽງແກ. ລະບຽບພວກເລວີ 23:23-25
   - ວັນທຳການລົບລ້າງບາບ ລະບຽບພວກເລວີ 23:26-32
   - ເທສການບູຊາໄຟ ລະບຽບພວກເລວີ 23:33-43; ອົພຍົບ 23:16

5. ສະລູບຫຍໍ້ໂດຍໃຊ້ ຂໍ້ສຸດທ້າຍຂອງເຈັ້ຍບົດຮຽນ

<u>ຄຳໜູນໃຈສຳລັບວັນນີ້:</u>

6. ໃຫ້ຖາມ ຈາກຄຳຖາມທີ 2 ຫາ ຄຳຖາມທີ 5 ໃນເຈັ້ຍບົດຮຽນ

7. ປິດດ້ວຍການທ້າທາຍ ໃຫ້ແບ່ງປັນສິ່ງທີ່ພຣະເຈົ້າສິດສອນໄວ້ໃຫ້ກ່ຽວກັບວັນຢຸດຕ່າງໆ.

ສຈ. ບຸນໂຮມ ພົມມະຈັນ

# ບົດແນະນຳຄູສອນ
# ບົດຮຽນທີ 5
# ທຸກຢ່າງເປັນຂອງພຣະເຈົ້າ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ລະບຽບພວກເລວີ 25:1-17, 23-24, 35-43

ຂໍ້ພຣະຄັມທັງຫມົດສຳລັບບົດຮຽນນີ້: ລະບຽບພວກເລວີ 25

ຈຸດສຳຄັນຂອງບົດຮຽນນີ້: ພຣະເຈົ້າຊົງເປັນເຈົ້າຂອງແຜ່ນດິນພຣະອົງສັ່ງໃຫ້ເບິ່ງແຍງຄົນຫລາຍກວ່າຫວງນຳຂີ້ດິນ

ຄຳຖາມເພື່ອການສຳຣວດ: ທ່ານຄິດວ່າໃຜເປັນເຈົ້າຂອງຕາດິນຂອງທ່ານ?

ຈຸດປະສົງຂອງບົດຮຽນນີ້: ເພື່ອອະທິບາຍເຣື່ອງດິນດອນຕອນຫຍ້າຂອງເຮົາ.

ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ນຳຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

## ບົດນຳ

ຂໍ້ພຣະຄັມພີໃນບົດຮຽນແມ່ນກ່າຍຈາກພຣະຄັມພີສະບັບໃຫມ່ ເພາະວ່າພຣະຄັມພີສີດຳບໍ່ມີພຣະທັມກົດຣະບຽບຂອງພວກເລວີ. ເລວີເປັນລູກຄົນທີສາມຂອງຢາໂຄບແລະນາງລີອາ (ປະຖົມມະການ 29:34). ພຣະເຈົ້າສັ່ງອິຣາເອນໃຫ້ຖວາຍພວກເລວີເປັນເຄື່ອງບູຊາພິເສດເພື່ອຮັບໃຊ້ພຣະເຈົ້າໃນພຣະວິຫານ (ອ່ານ ຈົດບັນຊີ 8).

ຂໍໃຫ້ຜູ້ນຶ່ງອ່ານ 25:1-17 ພຣະເຈົ້າຊົງໂຜດປະທານ

ກ. ປະຊາຊົນອິສຣາເອນນັ້ນເປັນທາດຂອງພຣະເຈົ້າເທົ່ານັ້ນ ບໍ່ໃຫ້ຜູ້ອື່ນເອົາໄປເປັນທາດຮັບໃຊ້ (ຂໍ້ 55)

ຂ. ເມື່ອເຂົ້າໄປຢູ່ໃນດິນແດນທີ່ພຣະເຈົ້າພວມຈະມອບໃຫ້ເຂົາຕ້ອງຖວາຍກຽດແກ່ພຣະເຈົ້າຄື;

1. ທຸກ 7 ປີ ບໍ່ຕ້ອງຂຸດຄົ້ນດິນປູກຝັງສິ່ງໃດ?
2. ໃຫ້ປູກຝັງແຕ່ 6 ປີ ສ່ວນປີທີ່ເຈັດນັ້ນໃຫ້ພັກຜ່ອນ.
3. ປີທີ 7 ແມ່ນອຸທິດໃຫ້ແກ່ພຣະເຈົ້າ ແລ້ວເພິ່ນຈະໂຜດປະທານໃຫ້ມີອາຫານການກິນ.
4. ຫລັງຈາກປະຕິບັດກັນມາ 7 ຄັ້ງຮວມເປັນ 49 ປີ ສ່ວນປີ 50 ນັ້ນ ໃຫ້ສລອງການປົດປ່ອຍຈາກການເປັນຂ້າທາດທີ່ເອຢິບ ຄືໃຫ້ພວກຂ້າທາດໄປເປັນອິສະຣະ, ດິນດອນຕອນຫຍ້າທີ່ຊື້ຂາຍໃນຍາມຂັດສົນໃຫ້ສົ່ງເຈົ້າຂອງເດີມຄືນ.

ຄ. ນີ້ແຫລະພຣະເຈົ້າຊົງໂຜດປະທານແຜ່ນດິນອຸດົມສົມບູນ, ແລະໂຜດຜູ້ຍາກຈົນໂດຍການສລອງ 50 ປີ

<u>ຂໍໃຫ້ຜູ້ນຶ່ງອ່ານ ຂ5:ຂ3-ຂ4</u> ຢ່າລືມກົດບັນຍັດ

ກ. ທີ່ດິນສາມາດຊື້ຂາຍກັນໄດ້ຊົ່ວຄາວ ບໍ່ແມ່ນຖາວອນ.

ຂ. ບໍ່ແມ່ນຜູ້ໃດເປັນເຈົ້າຂອງຖາວອນ ນອກຈາກພຣະເຈົ້າ.

ຄ. ເຮົາເປັນເຫມືອນຄົນຕ່າງດ້າວທີ່ອາສັຍຢູ່ໃນດິນຕອນນັ້ນເພື່ອທຳມາຫາກິນເທົ່ານັ້ນ, ເມື່ອເຮົາຈາກໄປ ທີ່ດິນນັ້ນຈະກັບໄປເປັນຂອງເຈົ້າຂອງເດີມຄືພຣະເຈົ້າຜູ້ສ້າງຟ້າແລະດິນ.

ງ. ຊື້ຂາຍທີ່ດິນຕ້ອງຍອມຮັບວ່າຄົບຮອບວັນສລອງ 50 ຕ້ອງສົ່ງເຈົ້າຂອງເດີມຄືນ.

<u>ຂໍໃຫ້ຜູ້ນຶ່ງອ່ານ ຂ5:35-43</u> ບັນເທົາຜູ້ຍາກຈົນ

ກ. ຄົນຍາກຈົນມາຈາກຫລາຍເຫດການ.

ຂ.ໃຫ້ຊ່ອຍເຫລືອຜູ້ຍາກຈົນໂດຍຮັບລາວມາເປັນລູກຈ້າງໃນເຮືອນ ຂໍ້ 35

ຄ.ໃຫ້ປະຕິບັດຕາມຄຳສັ່ງຂອງພຣະເຈົ້າ ຂໍ້ 36

ງ. ບໍ່ໃຫ້ເອົາດອກເບັ້ຍນຳລູກຈ້າງຫາກເຂົາຢືມ ຂໍ້ 36-37

ຈ. ຄົນຊາດດຽວກັນຢ່າປະຕິບັດກັບເຂົາເຫມືອນຂ້າທາດເຖິງແມ່ນເຂົາຂາຍຕົວກໍຕາມ ຂໍ້ 39

ສ. ຮັບຄົນອິສຣາເອນເປັນລູກຈ້າງເທົ່ານັ້ນ, ບໍ່ໃຫ້ເປັນຂ້າທາດ ຂໍ້ 40

ຊ. ໃຫ້ສົ່ງຂ້າທາດຄືນເມື່ອຄົບຮອບ 50 ປີ ຂອງການສລອງການປົດປ່ອຍເປັນຂ້າທາດຈາກເອຢິບ ຂໍ້ 41

ຍ. ສຳລັບອິສຣາເອນແມ່ນທາດຂອງພຣະເຈົ້າເທົ່ານັ້ນ ບໍ່ແມ່ນທາດຂອງມະນຸດ ຂໍ້ 42

<u>ຄຳຖາມ:</u>

1. ພຣະເຈົ້າຊົງໂຜດປະທານຫຍັງໃຫ້ອິສຣາເອນ?

2. ກ່ອນຈະເຂົ້າໄປຢູ່ກັບພຣະເຈົ້າໄດ້ສັ່ງແນວໃດ?

3. ໃຜເປັນເຈົ້າຂອງດິນທີ່ແທ້ຈິງ?

4. ພຣະເຈົ້າສອນເຮົາໃຫ້ບັນເທົາທຸກຄົນຍາກຈົນຢ່າງໃດ?

5. ບົດຮຽນວັນນີ້ຊ່ອຍຫຍັງທ່ານແດ່?

ສຈ. ທູນພັນ ວົງສຸຣິດທ໌

# ຄຳແນະນຳສຳລັບຄຣູ
# ບົດຮຽນທີ 6
# ສະແດງຄວາມເຊື່ອແບບກ້າຫານ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ຈົດເຊັນບັນຊີ 13:1-3, 17-20, 25-33; 14:1-10, 30-31
ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ຈົດເຊັນບັນຊີ 13--- 14
ຈຸດສຳຄັນຂອງບົດຮຽນນີ້: ພຣະເຈົ້າຊົງໃຫ້ພຣະພອນກັບການກະທຳອັນກ້າຫານທີ່ເປັນການຕອບສນອງການນຳພາຂອງພຣະອົງ.
ຄຳຖາມເພື່ອການສຳຣວດ: ມີຫຍັງແດ່ໃນຊີວິດຂອງທ່ານທີ່ເປັນການຊົງເອີ້ນຂອງພຣະເຈົ້າໃຫ້ມີຄວາມເຊື່ອແບບກ້າຫານ?
ຈຸດປະສົງຂອງບົດຮຽນນີ້: ເພື່ອທົບທວນເບິ່ງເຫດການທີ່ຂ້ອຍຫລືຜູ້ທີ່ຂ້ອຍຮູ້ໄດ້ສະແດງຄວາມເຊື່ອແບບກ້າຫານ ທີ່ເປັນການຕອບສນອງການນຳພາຂອງພຣະເຈົ້າ.

## ແຜນສຳລັບການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ເລີ້ມການຮຽນໂດຍຂໍໃຫ້ນັກຮຽນແບ່ງປັນວ່າ ມີຖິ່ນແຫ້ງແລ້ງປະເພດໃດແດ່ທີ່ພວກເຮົາເຄີຍໄດ້ຜ່ານໃນຊີວິດ. ທ່ານອາດຈະໃຫ້ຜູ້ນຶ່ງຂຽນຄຳຕອບໃສ່ກະດານ.

2. ອະທິບາຍວ່າບົດຮຽນຊຸດນີ້ຈະເວົ້າເຣື່ອງຊາວອິສຣາເອນຕອນພວກເຂົາຢູ່ໃນຖິ່ນແຫ້ງແລ້ງກັນດານ ແລະເວົ້າເຖິງສິ່ງທີ່ພຣະເຈົ້າໄດ້ຊົງເຮັດໃນລະຍະການເດີນທາງ.

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

3. ໃຊ້ຫົວຂໍ້ຂອງບົດຮຽນເພື່ອຊ່ວຍໃນການຮຽນ. ແຕ່ງນັກຮຽນໄວ້ເພື່ອອ່ານພຣະທັມແຕ່ລະພາກ. ໃຊ້ຄຳຖາມຕໍ່ໄປນີ້ ຫລືແຕ່ງຄຳຖາມຂອງທ່ານເອງ.
   (1) ພິສູດເບິ່ງຄຳສັ່ງ (13:1-3)
      ກ. ພຣະເຈົ້າໄດ້ໃຫ້ຄຳສັ່ງຫຍັງແດ່ກັບໂມເຊກ່ຽວກັບການສຳຣວດດິນແດນແຫ່ງພຣະສັນຍາ?

      ຂ. ເປັນຫຍັງຈຳເປັນຕ້ອງເລືອກຜູ້ນຳມາຈາກແຕ່ລະຕະກຸນ?

   (2) ປະເມີນເບິ່ງຄຳສັ່ງ (13:17-20)
      ກ. ແມ່ນຫຍັງຄືຈຸດປະສົງຂອງການສຳຣວດແຜ່ນດິນ?

      ຂ. ພວກສອດແນມຈະຕ້ອງຊອກຫາຫຍັງແດ່?

ຄ. ພວກສອດແນມໄດ້ນຳຫຍັງກັບມາແດ່?

(3) ປະເມີນເບິ່ງຄຳລາຍງານ (13:25-33)

ກ. ແມ່ນຫຍັງຄືຂ່າວດີ ຈາກພວກສອດແນມທັງໝົດ?

ຂ. ແມ່ນຫຍັງຄືຂ່າວຮ້າຍ?

ຄ. ແມ່ນຫຍັງຄືຂ່າວດີ?

(4) ຄວາມຢ້ານແລະຄວາມເຊື່ອ (14:1-10)

ກ. ແມ່ນຫຍັງຄືຄຳຕອບສອງແບບ ຕໍ່ຄຳສັ່ງຂອງພຣະເຈົ້າ?

ຂ. ເປັນຫຍັງຈຶ່ງເກີດມີການຕອບຫລາຍແບບຕໍ່ຂໍ້ມູນດຽວກັນ?

ຄ. ມີສະຖານະການແນວໃດທີ່ເຮັດໃຫ້ທ່ານຈະຕ້ອງຕອບດ້ວຍຄວາມຢ້ານ ຫລືດ້ວຍຄວາມເຊື່ອ?

(5) ຜົນຂອງຄວາມຢ້ານ (14:30-31)

ກ. ແມ່ນຫຍັງຄືຜົນຂອງການຕອບດ້ວຍຄວາມຢ້ານ?

ຂ. ແມ່ນຫຍັງຄືຜົນຂອງການຕອບດ້ວຍຄວາມເຊື່ອ?

ຄ. ຄວາມຢ້ານຈະມີຜົນແນ່ນອນ; ຄວາມເຊື່ອກໍເຊັ່ນດຽວກັນ. ທ່ານຈະເລືອກເອົາອັນໃດ?

<u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

4. ເລືອກຄຳຖາມສອງຂໍ້ໃນທ້າຍບົດຮຽນເພື່ອສົນທະນາ; ທ່ານຈະເລືອກເອົາຄຳຖາມໃດກໍໄດ້.

5. ເບິ່ງຂໍ້ທີນຶ່ງຂອງ<u>ຄຳແນະນຳສຳລັບຄຣູສອນ</u>. ຖາມ: ສິ່ງທີ່ເຮົາໄດ້ຮຽນຮູ້ກ່ຽວກັບເຣື່ອງຄວາມຢ້ານ ແລະຄວາມເຊື່ອຈະຊ່ວຍເຮົາວິທີໃດເວລາພວກເຮົາຕົກຢູ່ໃນຖິ່ນແຫ້ງແລ້ງ? ໃຫ້ເວລາເພື່ອສະແດງຄວາມເຫັນ. ອະທິຖານປິດ.

ສຈ. ສິດນີ ຄານ

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 7
# ເວລາຄວາມກົດດັນມີເພີ່ມຂຶ້ນ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ຈົດເຊັນບັນຊີ 20: 1-13
ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ຈົດເຊັນບັນຊີ 20
ຈຸດສຳຄັນຂອງບົດຮຽນນີ້: ພວກເຮົາຈະຕ້ອງຣະວັງການຕອບໃນທາງຜິດເວລາຖືກຄວາມກົດດັນ.
ຄຳຖາມເພື່ອການສຳຣວດ: ຄວາມກົດດັນສາມາດເຮັດຫຍັງໃຫ້ທ່ານແດ່?
ຈຸດປະສົງຂອງບົດຮຽນນີ້: ເພື່ອຈະຮູ້ການຕອບໃນທາງຖືກ ແລະທາງຜິດເວລາຖືກກົດດັນ ແລະຈະຮຽນຮູ້ວິທີເລືອກທີ່ຖືກຕ້ອງ.

## ແຜນສຳລັບການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ເອົາໝາກປູມເປົ້ານ້ອຽໜ່ອຍນຶ່ງມາຕຽມໄວ້. ເວລາເລີ້ມຮຽນໃຫ້ເປົ່າລົມໃສ່ໝາກປູມເປົ້າໜ້ອຍນຶ່ງ; ບອກນັກຮຽນໃຫ້ສັງເກດເວລາທ່ານເພີ້ມລົມໃສ່ໝາກປູມເປົ້າວ່າມີຫຍັງເກີດຂຶ້ນ. ຖາມ: ຖ້າເພີ້ມລົມເຂົ້າໄປເລື້ອຍໆຈະມີຫຍັງເກີດຂຶ້ນກັບໝາກປູມເປົ້າ?

   ເປົ່າລົມໃສ່ໝາກປູມເປົ້າຈົນມັນແຕກ. ຖາມ: ແມ່ນຫຍັງຈະເກີດຂຶ້ນກັບໝາກປູມເປົ້າເວລາພວກເຮົາເປົ່າລົມໃສ່ຫລາຍກວ່າຄວາມສາມາດຂອງມັນທີ່ຈະເກັບລົມໄດ້? ປຽບທຽບໃສ່ຊີວິດຂອງພວກເຮົາ. ພວກເຮົາສາມາດຮັບຄວາມກົດດັນໄດ້ຫລາຍພໍສົມຄວນ, ແຕ່ທຸກຄົນກໍມີຈຸດແຕກຫັກ. ບົດຮຽນສຳລັບມື້ນີ້ຈະຊ່ວຍພວກເຮົາໃຫ້ຮູ້ວິທີແກ້ໄຂກ່ອນທີ່ພວກເຮົາຈະໄປເຖິງຈຸດນັ້ນ.

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

2. ຂຽນຫົວຂໍ້ຕໍ່ໄປນີ້ໃສ່ໂປສະເຕີ້ໄວ້ລ່ວງໜ້າ:
   - ຈົດເຊັນບັນຊີ 15-- ຄຳສັ່ງເຣື່ອງການດຳເນີນຊີວິດປະຈຳວັນ, ເຣື່ອງການຖວາຍບູຊາ, ແລະເຣື່ອງຜົນຂອງຄວາມຜິດບາບ.
   - ຈົດເຊັນບັນຊີ 16-- ພຣະເຈົ້າຊົງຈັດການພວກກະບົດຕໍ່ໂມເຊແລະອາໂຣນ.
   - ຈົດເຊັນບັນຊີ 17-- ຮັບຮູ້ການນຳພາຂອງອາໂຣນ ແລະຊາວເລວີ.
   - ຈົດເຊັນບັນຊີ 18-- ໜ້າທີ່ຂອງປະໂຣຫິດ ແລະຊາວເລວີ.
   - ຈົດເຊັນບັນຊີ 19-- ຣະບຽບກ່ຽວກັບສິ່ງທີ່ເປັນມົນທິນ.

3. ໃຫ້ຜູ້ນຶ່ງອ່ານຈົດເຊັນບັນຊີ 20:1-5. ຖາມ: ເປັນຫຍັງຫລາຍຄົນຈຶ່ງຈົ່ມວ່າ? ພວກເຂົາຖາມໂມເຊເຣື່ອງຫຍັງແດ່? ຖ້າທ່ານເປັນໂມເຊ ທ່ານຈະຕອບພວກເຂົາແນວໃດ? ໃຊ້ຂໍ້ຄວາມໃນບົດຮຽນທີ່ວ່າ, "ປະຊາຊົນພວກນີ້ເກີດເປັນໂລກຄວາມຈຳເສື່ອມ" ແລະມັກຊອກຫາແຕ່ຄວາມຜິດ. ຖາມ: ພວກເຮົາເຄີຍເປັນແບບນັ້ນບໍ່? ເຕືອນນັກຮຽນວ່າພຣະເຈົ້າໄດ້ຊົງແຕ່ງຕັ້ງໂມເຊໃຫ້ເປັນຜູ້ນຳ. ໂມເຊເຄີຍໄດ້ກາບທູນພຣະເຈົ້າແທນປະຊາຊົນເປັນປະຈຳ. ພຣະເຈົ້າຊົງຈັດຫາສິ່ງທີ່ຕ້ອງການຂອງພວກເຂົາ.

4. ໃຫ້ຜູ້ນຶ່ງອ່ານ ຈົດເຊັນບັນຊີ 20:6-8. ຖາມ: ໂມເຊໄດ້ເຮັດຫຍັງຫລັງຈາກໄດ້ຍິນຄວາມຈົ່ມວ່າຂອງປະຊາຊົນ? (ໂມເຊໄດ້ເຂົ້າເຝົ້າພຣະເຈົ້າກ່ອນຈະຕອບປະຊາຊົນ). ອ່ານ ສຸພາສິດ 10:19. ແນະນຳວ່າວິທີທີ່ຖືກຕ້ອງໃນການຕອບໂຕ້ຄຳຕິຕຽນຄືການສແວງຫາຄຳຕອບຈາກພຣະເຈົ້າກ່ອນການຕອບ.

5. ອ່ານຈົດເຊັນບັນຊີ 20:9-11. ໃຊ້ຄຳຖາມຕໍ່ໄປນີ້ເພື່ອຊ່ວຍໃນການສົນທະນາ:

- ໂມເຊຮູ້ສຶກແນວໃດກັບພວກປະຊາຊົນ? (ໂມໂຫ)
- ພຣະເຈົ້າຊົງສັ່ງໂມເຊໃຫ້ເຮັດຫຍັງ? (ເວົ້າກັບໂງ່ນຫີນ)
- ໂມເຊໄດ້ເຮັດຫຍັງແທ້? (ເວົ້າກັບປະຊາຊົນ ແລະຕີໂງ່ນຫີນທ່ານຄິດວ່າໂມເຊໄດ້ເຊື່ອຟັງພຣະເຈົ້າບໍ່? ຟັງຫລືບໍ່ຟັງ?

6. ໃຫ້ນັກຮຽນອ່ານຈົດເຊັນບັນຊີ 20:12-13 ຢ່າງງຽບໆ. ຖາມ: ແມ່ນຫຍັງຄືຜົນຂອງການກະທຳຂອງໂມເຊ? ໂມເຊແລະອາໂຣນໄດ້ເຮັດຫຍັງຜິດແດ່ ຈົນເຮັດໃຫ້ພຣະເຈົ້າໄດ້ລົງໂທດພວກເຂົາ? ສົນທະນາກັນໃນເຣື່ອງນີ້; ແຕ່ລະຄົນອາດຈະມີຄວາມຄິດຕ່າງໆກັນ; ພຣະເຈົ້າບໍ່ຊົງອະນຸຍາດໃຫ້ໂມເຊ ແລະອາໂຣນເຂົ້າໄປໃນແຜ່ນດິນແຫ່ງພຣະສັນຍາ. ພວກເຮົາຮູ້ວ່າພຣະເຈົ້າບໍ່ຊົງພໍພຣະທັຍໃນການກະທຳຂອງໂມເຊແລະອາໂຣນ; ບາງທີອາດຈະແມ່ນເຫດການທີ່ເກີດຂຶ້ນທີ່ເມຣີບາ (20:13).

## ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)

7. ບອກທຸກຄົນວ່າ ພວກເຮົາແຕ່ລະຄົນສາມາດເລືອກວ່າພວກເຮົາຈະຕໍ່ສູ້ກັບຄວາມກົດດັນ ຫລືການຕິຕຽນແນວໃດ. ໃຫ້ບາງຄົນສແດງຄວາມເຫັນເຖິງບາດກ້າວທີ່ຈະຊ່ວຍໃນການຕໍ່ສູ້ກັບຄວາມກົດດັນຫລືການຕິຕຽນ. ສົນທະນາຂໍ້ຄວາມຕໍ່ໄປນີ້:

- ຕັດສິນໃຈວ່າຈະເປັນຜູ້ຊອກຫາຄຳຕອບ.
- ຕັດສິນໃຈວ່າຈະງຽບຢູ່ ຈົນກວ່າທ່ານໄດ້ຮັບຄຳປຶກສາຈາກພຣະເຈົ້າ.
- ຕັດສິນໃຈວ່າທ່ານຈະເຮັດຕາມທີ່ພຣະເຈົ້າຊົງນຳ.
- ຕັດສິນໃຈວ່າຈະເລືອກວິທີຕອບທີ່ຖືກຕ້ອງ.
- ຈົ່ງຕັດສິນໃຈກ່ອນທີ່ຄວາມກົດດັນນັ້ນຈະທະວີຄູນຂຶ້ນ.

ຊັກຊວນໃຫ້ບາງຄົນເປັນພຍານເຖິງວິທີຕໍ່ສູ້ຄວາມກົດດັນທີ່ໄດ້ໃຊ້ມາແລ້ວ ແລະແນະນຳການປ່ຽນແປງທີ່ທຸກຄົນສາມາດເຮັດເພື່ອອະນາຄົດ. ອະທິຖານປິດ.

ສຈ. ສິດນີ ຄານ

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 8
# ຢ່າຂັດຂວາງພຣະເຈົ້າ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ຈົດເຊັນບັນຊີ 22:1-6, 22-35; 24:10-17
ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ຈົດເຊັນບັນຊີ 22--24
ຈຸດສຳຄັນຂອງບົດຮຽນນີ້: ກິຈກັມຕ່າງໆທີ່ຢາກຂັດຂວາງພຣະເຈົ້າ ແລະພຣະປະສົງຂອງພຣະອົງຈະບໍ່ເກີດຜົນ.
ຄຳຖາມເພື່ອການສຳຣວດ: ພວກເຮົາຕ້ອງຮູ້ວ່າໃນທີ່ສຸດຊັຍຊະນະກໍເປັນຂອງພຣະເຈົ້າ ໃນສິ່ງໃດແດ່?
ຈຸດປະສົງຂອງບົດຮຽນນີ້: ເພື່ອຈະຮູ້ສະພາບໃນຊີວິດຂອງຂ້ອຽວ່າມີແນວໃດແດ່ທີ່ຕ້ອງການໄດ້ຍິນຄຳວ່າ ໃນທີ່ສຸດຊັຍຊະນະກໍເປັນຂອງພຣະເຈົ້າ.

## ແຜນສຳລັບການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ໃຊ້ຄຳຖາມຂໍ້ທີນຶ່ງໃນບົດຮຽນເພື່ອເລີ້ມຕົ້ນການສົນທະນາ. ພິຈາຣະນາເບິ່ງຂໍ້ຄວາມຕໍ່ໄປນີ້: " ຄວາມຮູ້ເທົ່າບໍ່ເຖິງການຂອງພວກເຮົາກ່ຽວກັບພຣະປະສົງຂອງພຣະເຈົ້າ ແລະການຄຸ້ມຄອງຂອງພຣະອົງ ບໍ່ສາມາດທີ່ຈະປ່ຽນແປງພັນທະກິດຂອງພຣະອົງສຳລັບຊີວິດພວກເຮົາ. ເງິນຄຳ, ສິນບົນ, ແລະຄ່າຈ້າງ ບໍ່ມີອຳນາດເໜືອພຣະປະສົງຂອງພຣະເຈົ້າ ແລະແຜນການໄຖ່ມະນຸດຂອງພຣະອົງໃນປະວັດສາດ."

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

2. ບອກນັກຮຽນວ່າ ບົດຮຽນນີ້ເປັນບົດຮຽນສຸດທ້າຍຈາກພຣະທັມຈົດເຊັນບັນຊີ. ໃຊ້ຂໍ້ຄວາມຕໍ່ໄປນີ້ເພື່ອສລູບບົດຮຽນທີ່ຜ່ານມາ:

   - ພຣະເຈົ້າຊົງມີແຜນສຳລັບຊົນຊາດອິສຣາເອນ. ພຣະອົງໄດ້ຊົງປົດປ່ອຍພວກເຂົາຈາກປະເທດເອຢິບເພື່ອຈະເດີນທາງໄປຫາດິນແດນທີ່ພຣະເຈົ້າໄດ້ຊົງສັນຍາໄວ້ສຳລັບພວກເຂົາ. ພວກເຂົາພາກັນຈົ່ມວ່າຕລອດທາງ. ພຣະເຈົ້າໄດ້ຊົງດູແລພວກເຂົາທຸກຢ່າງ ແຕ່ພວກຜູ້ນຳບໍ່ເຊື່ອພຣະເຈົ້າວ່າພວກເຂົາຈະສາມາດຍຶດຄອງດິນແດນນັ້ນໄດ້. (ບົດຮຽນບົດທີ 6)
   - ພຣະເຈົ້າໄດ້ຊົງລົງໂທດພວກເຂົາໂດຍໃຫ້ພວກເຂົາຫລົງທາງຢູ່ໃນຖິ່ນແຫ້ງແລ້ງກັນດານເປັນເວລາ 40 ປີເພື່ອໃຫ້ຄົນຍຸກນັ້ນຕາຍໄປໝົດ. ປານນັ້ນພວກເຂົາກໍຍັງບໍ່ຢຸດໃນການຈົ່ມວ່າ. ໃນທີ່ສຸດໂມເຊ ແລະອາໂຣນກໍເກີດຄວາມໂມໂຫກັບປະຊາຊົນ ແລະພຣະເຈົ້າບໍ່ຊົງອະນຸຍາດໃຫ້ພວກເຂົາສອງຄົນເຂົ້າໄປໃນແຜ່ນດິນແຫ່ງພຣະສັນຍາ. (ບົດຮຽນບົດທີ 7)

3. ໃຫ້ນັກຮຽນຄົນນຶ່ງອ່ານຈົດເຊັນບັນຊີບົດທີ 21. ສລູບໃຫ້ນັກຮຽນຟັງ, ໂດຍສເພາະເຣື່ອງງູທອງແດງ. ເຕືອນນັກຮຽນວ່າດັ່ງນີ້:

   - ພຣະເຈົ້າຊົງຈັດຫາທຸກຢ່າງສຳລັບໄພ່ພົນຂອງພຣະອົງ.
   - ສິ່ງທີ່ພຣະເຈົ້າຊົງສັນຍາ, ພຣະອົງຈະເຮັດ.

- ພຣະອົງຊົງໃຫ້ຄຳຕອບ ແລະຊົງໃຫ້ຊັຍຊະນະ.
- ເຣື່ອງນີ້ໃຫ້ເບິ່ງ ໂຢຮັນ 3:14.

4. ໃນຂະນະທີ່ທ່ານກຳລັງເບິ່ງເຣື່ອງຂອງຜູ້ປະກາດບາລາອາມ, ໂຕລໍ, ແລະທູດສວັນ, ຂໍໃຫ້ຜູ້ນຶ່ງອ່ານ ຈົດເຊັນບັນຊີ 22:1-6. ອະທິບາຍຂໍ້ພຣະທັມໂດຍໃຊ້ບົດຮຽນ. ໃຫ້ອີກຜູ້ນຶ່ງອ່ານ ຈົດເຊັນບັນຊີ 22:15-35. ທ່ານອາດຈະໃຫ້ຫລາຍໆ ຄົນມີສ່ວນໃນການອ່ານ; ເຊັ່ນໃຫ້ຜູ້ນຶ່ງເປັນ ບາຫລາກ, ຜູ້ນຶ່ງເປັນບາລາອາມ, ຜູ້ນຶ່ງເປັນ ທູດສວັນ, ແລະຕໍ່ໆໄປ. ທ່ານອາດຈະເປັນຜູ້ເລົ່າເຣື່ອງ. ຫລັງຈາກອ່ານຈົບແລ້ວໃຫ້ອະທິບາຍ 22:22-35. ໃຊ້ຂໍ້ຄວາມຕໍ່ໄປນີ້ເວົ້າກັບນັກຮຽນ:
    - ຊົນຊາດອິສຣາເອັນບໍ່ຮູ້ວ່າພຣະເຈົ້າຊົງໄດ້ເຮັດສົງຄາມແທນພວກເຂົາໂດຍການໃຊ້ທູດສວັນ.
    - "ພຣະເຈົ້າຊົງສັດຊື່ຕໍ່ພຣະຄຳ. ພຣະອົງຈະໃຫ້ພອນຜູ້ທີ່ໃຫ້ພອນໄພ່ພົນຂອງພຣະອົງ ແລະຈະສາບແຊ່ງຜູ້ທີ່ສາບແຊ່ງພວກເຂົາ."

5. ສລູບ ຈົດເຊັນບັນຊີ 22:36--24:9. ໃຫ້ຜູ້ນຶ່ງອ່ານ ຈົດເຊັນບັນຊີ 24:10-17. ຖາມ: ບາລາອາມໄດ້ເຫັນຫຍັງແດ່ໃນອະນາຄົດ? (ເຂົາໄດ້ເຫັນຊັຍຊະນະຂອງພຣະເຈົ້າໃນແຜນການຂອງພຣະອົງ. ເຂົາໄດ້ເຫັນພຣະສັນຍາສຳລັບກະສັດດາວິດເຣື່ອງເມືອງໂມອາບ. ເບິ່ງ 2 ຊາມູເອັນ 8:2, 13-14).

<u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

6. ເບິ່ງຄຳຖາມຂໍ້ 2 ແລະສົນທະນາກັນ. ໃຊ້ຄຳພຍານຕໍ່ໄປນີ້ຊ່ວຍ:

    ນາງເບັບເວີລີ ເກີດການປ່ວຍດ້ວຍໂລກມະເຮັງ. ນັບວ່າເປັນການຕໍ່ສູ້ອັນຍິ່ງໃຫຍ່ສຳລັບໂຕລາວ, ເຖິງແມ່ນວ່າລາວຈະເປັນຄຣິສຕຽນ. ພວກເຮົາສັຣເສີນນ້ຳໃຈຂອງລາວ. ລາວໄດ້ໃຫ້ພຣະເຈົ້າຊົງໃຊ້ເພື່ອໜູນໃຈຜູ້ປ່ວຍຄົນອື່ນໆ. ມີຄົນປ່ວຍອີກຄົນນຶ່ງບໍ່ຢາກຈະມາຮັກສາຕົວດ້ວຍຣັງສີ ເພາະເຄີຍໄດ້ຍິນແຕ່ເຣື່ອງບໍ່ດີ. ແຕ່ເມື່ອນາງເບັບເວີລີໄດ້ເຂົ້າມາຮວມຢູ່ໃນກຸ່ມຂອງຄົນປ່ວຍພວກນີ້ ທຸກຢ່າງກໍໄດ້ປ່ຽນແປງ. ຜູ້ປ່ວຍຄົນນີ້ໄດ້ເວົ້າວ່າທ່າທີຂອງເບັບເວີລີໃນເຣື່ອງການເຈັບປ່ວຍເຮັດໃຫ້ຕົວເອງຢາກຈະມາໃຊ້ເວລານຳລາວ. ນອກນັ້ນ, ເບັບເວີລີຍັງໄດ້ເປັນກຳລັງໃຈໃຫ້ຄົນປ່ວຍອີກໃນກຸ່ມຫລາຍໆຄົນ.

    ເບິ່ງຄຳຖາມຂໍ້ 4 ແລ້ວສົນທະນາ.

7. ອ່ານ ເຢເຣມີຢາ 29:11-13. ອະທິຖານເພື່ອພວກເຮົາຈະໄດ້ເບິ່ງບັນຫາໄປອີກໃນມຸມໃໝ່.

ສຈ. ສິດນີ ຄານ

# <u>ຄຳແນະນຳສຳລັບຄຣູ</u>
# <u>ບົດຮຽນທີ 9</u>
# <u>ເຂົ້າໃຈເຣື່ອງຂອງຊີວິດ</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ພຣະບັນຍັດສອງ 4:9-14, 32-40
<u>ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:</u> ພຣະບັນຍັດສອງ 1:1-- 4:40
<u>ຈຸດສຳຄັນຂອງບົດຮຽນນີ້:</u> ເບິ່ງຊີວິດຂອງພວກເຮົາຈາກພຣະປະສົງຂອງພຣະເຈົ້າຈະສາມາດຊ່ວຍເຮົາໃຫ້ເຂົ້າໃຈຊີວິດນີ້ດີຂື້ນ.

<u>ຄຳຖາມເພື່ອການສຳຣວດ:</u> ເວລາທ່ານພິສູດເບິ່ງຊີວິດຂອງຕົນເອງ, ທ່ານກຳລັງເຫັນຫຍັງແດ່?
<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອສລູບເບິ່ງປະວັດສາດຂອງອິສຣາເອັນໃນພຣະທັມນີ້ ແລະເພື່ອຈະເຂົ້າໃຈຊີວິດຂອງຕົວເອງໃຫ້ດີຂື້ນ.

## <u>ແຜນສຳລັບການສອນ</u>

### <u>ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)</u>

1. ເລີ້ມການຮຽນໂດຍໃຊ້ເວລາພິຈາຣະນາຄຳຖາມຕໍ່ໄປນີ້: ທ່ານເບິ່ງຊີວິດຂອງຕົນເອງໃນທຳນອງໃດ? ທ່ານໄດ້ເຫັນການນຳພາຂອງພຣະເຈົ້າໃນຊີວິດແນວໃດແດ່? ມີຕອນໃດບໍ່ ທີ່ທ່ານເຫັນວ່າຖ້າພຣະເຈົ້າບໍ່ຊົງຢູ່ດ້ວຍທ່ານອາດຈະຫລົງໄປທາງຜິດ? ພຣະເຈົ້າໄດ້ຊົງຮັກສາທ່ານໄວ້ຈາກຄວາມເຈັບປວດຢ່າງໃດແດ່? ໃຫ້ເວລາແຕ່ລະຄົນເພື່ອພິສູດຊີວິດຂອງຕົວເອງ. ໃຫ້ບາງຄົນແບ່ງປັນ.

### <u>ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)</u>

2. ໃຫ້ເບື້ອງຫລັງສຳລັບບົດຮຽນໃນມື້ນີ້. ຂຽນຫົວຂໍ້ບົດຮຽນໃສ່ກະດານ:
   (1) ທີ່ແຄມຊາຍແດນ (1:1-- 3:29)
   (2) ພຣະເຈົ້າຜູ້ຊົງຢືນຢູ່ໃກ້ (4:1-8)
   (3) ຂໍທ່ານຢ່າລືມ (4:9-14)
   (4) ບໍ່ມີໃຜອີກແລ້ວ (4:32-40)

3. ຊອກຜູ້ນຶ່ງໄວ້ລ່ວງໜ້າ (ກ່ອນມື້ຈະຮຽນ) ໃຫ້ອ່ານແລະຕຽມຕົວເພື່ອຈະເລົ່າເຣື່ອງໃນ ພຣະບັນຍັດສອງ 1:1-- 3:29 ໃຫ້ເພື່ອນນັກຮຽນຟັງ. ເມື່ອເຖິງຕອນນີ້, ໃຫ້ຜູ້ທີ່ທ່ານໄດ້ຕຽມໄວ້ແລ້ວນັ້ນເລົ່າເຣື່ອງນີ້.

4. ເບິ່ງຫົວຂໍ້ທີສອງ. ໃຫ້ຄົນນຶ່ງອ່ານ ພຣະບັນຍັດສອງ 4:1-8. ອະທິບາຍ 6 ຂໍ້ທຳອິດໂດຍໃຊ້ບົດຮຽນ. ອ່ານປະກອບ: ຈົດເຊັນບັນຊີ 25:1-5 ເວລາສົນທະນາ ພຣະບັດຍັດສອງ 4:3. ໃຫ້ນັກຮຽນຜູ້ນຶ່ງອະທິບາຍ ພຣະບັນຍັດສອງ 4:7-8 ຊຶ່ງເປັນເຣື່ອງພຣະເຈົ້າຊົງຢູ່ດ້ວຍ.

5. ເບິ່ງຫົວຂໍ້ທີສາມຂອງບົດຮຽນ ແລະຂໍໃຫ້ຜູ້ນຶ່ງອ່ານ ພຣະບັນຍັດສອງ 4:9-14. ໃຫ້ນັກຮຽນສລູບວ່າ ໂມເຊ ໄດ້ເວົ້າຫຍັງແດ່ກັບປະຊາຊົນ.

6. ເບິ່ງຫົວຂໍ້ສຸດທ້າຍຂອງບົດຮຽນ ແລະໃຫ້ຜູ້ນຶ່ງອ່ານພຣະບັນຍັດສອງ 4:32-40. ໃຊ້ບົດຮຽນເພື່ອສລູບວ່າພຣະເຈົ້າຊົງມີທັສນະແນວໃດກ່ຽວກັບເຣື່ອງການໄຫວ້ພຣະທຽມ, "ຄວາມຄິດສມັຍໃໝ່", ແລະ "ຄວາມຄິດທີ່ມາຫລັງຈາກຄວາມຄິດສມັຍໃໝ່." (ເບິ່ງຄຳອະທິບາຍໃນບົດຮຽນ)

<u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

7. ໃຊ້ຄຳຖາມໃນຕອນສຸດທ້າຍຂອງບົດຮຽນເພື່ອການສົນທະນາ. ໃຫ້ໂອກາດນັກຮຽນເພື່ອຕອບຄຳຖາມແຕ່ລະຂໍ້.

8. ປິດການຮຽນໂດຍໃຫ້ນັກຮຽນຜູ້ນຶ່ງອະທິຖານ ເພື່ອລະນຶກເຖິງພຣະເຈົ້າແລະຂອບພຣະຄຸນທີ່ພຣະອົງຊົງສັດຊື່, ແລະຊົງຢູ່ໃກ້ພວກເຮົາຕລອດເວລາ.

ສຈ. ສິດນີ ຄານ

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນບົດທີ 10
# ຄຳສັ່ງສິບຂໍ້ສຳລັບຊີວິດ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ພຣະບັນຍັດສອງ 5: 1-21
ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ພຣະບັນຍັດສອງ 5
ຈຸດສຳຄັນຂອງບົດຮຽນນີ້: ພຣະບັນຍັດສິບປະການບອກເຖິງຄວາມຮັບຜິດຊອບສຳລັບການດຳເນີນຊີວິດໃນພຣະສັນຍາກັບພຣະເຈົ້າ.

ຄຳຖາມເພື່ອການສຳຣວດ: ແມ່ນຫຍັງຄືພື້ນຖານສຳລັບຊີວິດມະນຸດໃນຄວາມສັມພັນກັບພຣະເຈົ້າ?
ຈຸດປະສົງຂອງບົດຮຽນນີ້: ເພື່ອອະທິບາຍຄວາມໝາຍ ແລະຜົນປໂຍດຂອງພຣະບັນຍັດສິບປະການ.

## ແຜນສຳລັບການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ຫ້ອຍສາຍດິ່ງ (Plumb line) ໃສ່ເພດານ ແລະໃຫ້ລູກກິ່ວຫ້ອຍຢູ່ລະດັບສາຍຕາຂອງນັກຮຽນທີ່ນັ່ງຢູ່ຕັ່ງ. ຖາມນັກຮຽນວ່າເຂົາເຈົ້າຮູ້ບໍ່ວ່າສາຍດິ່ງມີປໂຍດແນວໃດ. (ຊ່າງກໍ່ໃຊ້ສາຍດິ່ງເປັນຫລັກເວລາກໍ່ຝາປະທາຍ ເມື່ອໃຫ້ຝານັ້ນຊື່ຕາມຄວາມຕ້ອງການ). ເວົ້າກັບນັກຮຽນວ່າບາງຄັ້ງຊີວິດຂອງພວກເຮົາກໍໄດ້ອອກຈາກທາງຂອງພຣະເຈົ້າທີ່ມີໄວ້ສຳລັບເຮົາ. ແຕ່ລະມື້ພວກເຮົາຄວນກວດເບິ່ງວ່າພວກເຮົາກຳລັງດຳເນີນຊີວິດຕາມແຜນການຂອງພຣະເຈົ້າຫລືບໍ່. ແຜນການນັ້ນແມ່ນພຣະບັນຍັດສິບປະການ.

2. ອ່ານ "ຈຸດສຳຄັນຂອງບົດຮຽນນີ້" ເພື່ອຊ່ວຍໃນການເລີ້ມບົດຮຽນໃນມື້ນີ້.

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

3. ອ່ານຄຳນຳເພື່ອຊ່ວຍໃຫ້ເຂົ້າໃຈເນື້ອຫາຂອງພຣະທັມພຣະບັນຍັດສອງ. ທ່ານອາດຈະຈັດຕຽມນັກຮຽນຄົນນຶ່ງໄວ້ລ່ວງໜ້າຫລາຍໆມື້ ແລ້ວໃຫ້ຜູ້ນັ້ນມາແບ່ງປັນກັບເພື່ອນນັກຮຽນໃນມື້ສຶກສາພຣະທັມຮ່ວມກັນ.

4. ໃຫ້ຜູ້ນຶ່ງອ່ານພຣະບັນຍັດສອງ 5:1-21 ແລະໃຫ້ທຸກຄົນເບິ່ງພຣະຄັມພີໄປພ້ອມໆກັນ. ໃຫ້ນັກຮຽນບາງຄົນເປີດເບິ່ງ ອົພຍົບ 20:1-17 ເພື່ອປຽບທຽບ. ຖາມວ່າພວກເຂົາເຈົ້າເຫັນຫຍັງແດ່ທີ່ແຕກຕ່າງກັນໃນພຣະທັມສອງບົດນີ້. (ເບິ່ງພຣະບັນຍັດເຣື່ອງການຮັກສາວັນຊະບາໂຕ ແລະການໂຄຣົບພໍ່ແມ່).

5. ຂຽນ "ຈົ່ງຟັງໃຫ້ດີ (5:1-5)" ໃສ່ກະດານ. ອ່ານ ພຣະບັນຍັດສອງ 5:1-5. ອະທິບາຍບົດຮຽນໂດຍເນັ້ນຂໍ້:
   - 5:1 (ຈົ່ງໝັ້ນຮຽນ ແລະເຊື່ອຟັງ)

- 5:3 (ບໍ່ແມ່ນສຳລັບຄົນທີ່ຜ່ານມາ, ແຕ່ແມ່ນເພື່ອຄົນໃນປັດຈຸບັນ).

6. ຂຽນຫົວຂໍ້ທີສອງໃສ່ກະດານ, "ຄວາມສັມພັນຂອງພວກເຮົາກັບພຣະເຈົ້າ (5:6-15)." ບອກນັກຮຽນວ່າພຣະບັນຍັດສີ່ຂໍ້ທຳອິດເວົ້າເຖິງຄວາມສັມພັນລະຫວ່າງພວກເຮົາແລະພຣະເຈົ້າ. ເບິ່ງບັດຍັດແຕ່ລະຂໍ້ ແລະອະທິບາຍ. ໃຫ້ໂອກາດນັກຮຽນເພື່ອໃຫ້ຄວາມເຫັນພຣະບັນຍັດແຕ່ລະຂໍ້ໄປ:
   - ບັນຍັດຂໍ້ທີນຶ່ງ-- ໃຜຄືນ້ຳເບີນຶ່ງ? (5:7)
   - ບັນຍັດຂໍ້ທີສອງ-- ຮູບພາບຂອງພຣະເຈົ້າ (5:8-10)
   - ບັນຍັດຂໍ້ສາມ-- ໂຄຣົບນາມຊື່ຂອງພຣະເຈົ້າ (5:11)
   - ບັນຍັດຂໍ້ທີສີ່-- ໂຄຣົບວັນຂອງພຣະເຈົ້າ (5:12-15)

7. ຂຽນຫົວຂໍ້ທີສາມໃສ່ກະດານ, "ຄວາມສັມພັນຂອງພວກເຮົາກັບຄົນອື່ນໆ (5:16-21)." ບອກນັກຮຽນວ່າພຣະບັນຍັດ 6 ຂໍ້ສຸດທ້າຍເວົ້າເຖິງຄວາມສັມພັນຂອງພວກເຮົາແລະຄົນອື່ນ. ອະທິບາຍບັນຍັດເປັນຂໍ້ໄປ. ໃຫ້ໂອກາດນັກຮຽນເພື່ອສະແດງຄວາມເຫັນ.
   - ບັນຍັດຂໍ້ທີຫ້າ-- ບັນຍັດທີ່ຖືກລືມ (5:16)
   - ບັນຍັດຂໍ້ທີຫົກ-- ຊີວິດເປັນສິ່ງສັກສິດ (5:17)
   - ບັນຍັດຂໍ້ທີເຈັດ-- ຈົ່ງສັດຊື່ຕລອດຊີວິດ (5:18)
   - ບັນຍັດຂໍ້ທີແປດ-- ຂອງໃຜຂອງມັນ (5:19)
   - ບັນຍັດຂໍ້ທີເກົ້າ-- ຢ່າເປັນພຍານບໍ່ຈິງ (5:20)
   - ບັນຍັດຂໍ້ທີສິບ-- ພະລັງຂອງຄວາມພໍໃຈ (5:21)

   (ທ່ານອາດຈະຂຽນພຣະບັນຍັດສິບປະການນີ້ໃສ່ເຈັ້ຽໂປສເຕີ້ໄວ້ລ່ວງໜ້າ)

<u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

8. ສລູບບົດຮຽນໂດຍໃຊ້<u>ຄຳສລູບ</u>ໃນບົດຮຽນນີ້; ຖ້າມີເວລາພໍ ທ່ານອາດຈະໃຫ້ໂອກາດນັກຮຽນເພື່ອສະແດງຄວາມເຫັນ ໂດຍໃຊ້ຄຳຖາມໃນທ້າຍບົດຮຽນເພື່ອຊ່ວຍນຳ.

9. ປິດການສຶກສາດ້ວຍການອະທິຖານ; ມອບຊີວິດເພື່ອການເຊື່ອຟັງໃຫ້ຫລາຍຂຶ້ນແຕ່ລະມື້.

ສຈ. ສິດນີ ຄານ

<u>ບົດແນະນຳຄຣູສອນ</u>

<u>ບົດຮຽນທີ 11</u>

<u>ບອກສອນລູກຫລານ</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ພຣະບັນຍັດສອງ 6:1-9, 20-25

<u>ຂໍ້ພຣະຄັມທັງຫມົດສຳລັບບົດຮຽນນີ້:</u> ພຣະບັດຍັດສອງ 6

<u>ຈຸດສຳຄັນຂອງບົດຮຽນນີ້:</u> ແຕ່ລະສມັຍມີຫນ້າທີ່ສອນເຣື່ອງຂອງພຣະເຈົ້າ

<u>ຄຳຖາມເພື່ອການສຳຣວດ:</u> ເຮົາຈະສອນເດັກນ້ອຍເຣື່ອງຂອງພຣະເຈົ້າຢ່າງໃດ?

<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອຊອກຫາວິທີພວກອິສຣາເອນສອນເດັກນ້ອຍຢ່າງໃດ ຈາກນັ້ນກໍມາດັດແປງໃສ່ວິທີຂອງເຮົາໃນສມັຍນີ້

<u>ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ</u>

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ນຳຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

<u>ຄຳແນະນຳ</u>

ຖາມນັກຮຽນ ມີໃຜແດ່ມີຮູບຫລານ, ຫລືລູກ, ຫລືລູກທີ່ມີດຽວນີ້. ຫາກມີຮູບຂໍໃຫ້ເອົາມາເບິ່ງຄັກໆ ແລ້ວຖາມນັກຮຽນດັ່ງນີ້:

ກ. ກ່ອນຈະໄດ້ລູກ, ຫລືຫລານຜູ້ນີ້ມາທ່ານພົບຄວາມລຳບາກຫລາຍປານໃດ? ໃຫ້ເວລານັກຮຽນຕອບ.

ຂ. ເມື່ອລູກ, ຫລືຫລານຜູ້ນີ້ໃຫຍ່ມາ ທ່ານຢາກເຫັນລາວເປັນຄົນແນວໃດ?

ຄ. ໃນວິຊາຄວາມຮູ້ ຣວມທັງຄວາມເຊື່ອໃນພຣະເຈົ້າທີ່ທ່ານມີ ທ່ານຕັ້ງໃຈວ່າຈະໃຊ້ກັບລາວແນວໃດ?

ງ. ໃຫ້ຄຳເລົ້າໂລມໃຈນັກຮຽນວ່າ, ການສິດສອນຂອງເຮົາຜູ້ເປັນພໍ່ ເປັນແມ່ສາມາດຊ່ອຍລູກໄດ້ເປັນບາງສ່ວນ, ການເວົ້າເຣື່ອງຂອງພຣະເຈົ້າໃຫ້ລູກຫລານຟັງຊ່ອຍໃຫ້ເຂົາເຈົ້າຮູ້ຈັກພຣະເຈົ້າຄືກັນ ດັ່ງນັ້ນເຮົາສົມຄວນສັ່ງສອນລູກຫລານອີງຕາມຄວາມຮູ້, ຄວາມສາມາດ ແລະອີງຕາມຄວາມເຊື່ອຂອງເຮົາ.

1. <u>ຂໍໃຫ້ຜູ້ນຶ່ງອ່ານ ພຣະບັນຍັດສອງ 6:1-3</u> (ຢຳເກງດ້ວຍການເຊື່ອຟັງແລະປະຕິບັດ)

ກ. ພຣະເຈົ້າສັ່ງໂມເຊໃຫ້ສັ່ງສອນອິສຣາເອນໃຫ້ປະຕິບັດຣີດຄອງປະເພນີຂອງພຣະເຈົ້າ.

ຂ. ໂມເຊເຊື່ອຟັງແລະເຮັດຕາມພຣະເຈົ້າສັ່ງໃຫ້ເພິ່ນສອນ.

ຄ. ສອນໃຫ້ຢຳເກງຕລອດຊີວິດ. ສົນທະນາຄຳວ່າ ຢຳເກງແມ່ນຫຍັງ

ງ. ຫາກປະຊາຊົນອິສຣາເອນປະຕິບັດຕາມຄຳສັ່ງ ກິຈການທຸກຢ່າງຂອງເຂົາຈະລຸລ່ວງດ້ວຍດີ (ຂໍ້ 3)

ຈ. ສົນທະນາກິຈການທຸກຢ່າງລຸລ່ວງ.

ສ. ພຣະເຈົ້າສັ່ງໂມເຊໃຫ້ສັ່ງສອນອິສຣາເອນ, ພຣະເຢຊູກໍຊົງສັ່ງເຮົາອອກໄປສິດສອນໃນ ມທ 28:19-20.

2. <u>ໃຫ້ຜູ້ນຶ່ງອ່ານ ພຣະບັນຍັດສອງ 6:4-9</u> (ຄຳສັ່ງອັນສຳຄັນທີ່ສຸດ)

ກ. ໃຫ້ປະຕິບັດຮີດຄອງປະເພນີ ເມື່ອເຂົ້າໄປຢູ່ໃນແຜ່ນດິນສັນຍາ (ແຜ່ນດິນການາອານ)

ຂ. ຮີດຄອງປະເພນີມີດັ່ງນີ້;

1. ມີພຣະເຈົ້າອົງດຽວ.
2. ຮັກພຣະເຈົ້າດ້ວຍສຸດຈິດ, ດ້ວຍສຸດໃຈ, ແລະດ້ວຍສຸດສະຕິກຳລັງ.
3. ບໍ່ລືມພຣະຄຸນ.

3. <u>ໃຫ້ຜູ້ນຶ່ງອ່ານ ພຣະບັນຍັດສອງ 6:9-10</u> ( ຮັ່ງມີແລ້ວຢ່າລືມພຣະເຈົ້າ)

ກ. ແຜ່ນດິນທີ່ເຂົ້າໄປຢູ່ນັ້ນ ເຂົາບໍ່ໄດ້ເຮັດຫຍັງໝົດ ແຕ່ມາເປັນເຈົ້າຂອງ.

ຂ. ເຂົາຈະມີທຸກຢ່າງຕາມຕ້ອງການ.

ຄ. ໂມເຊເຕືອນໃຫ້ຣະວັງໃຫ້ດີເມື່ອມີແລ້ວຢ້ານຫລົງລືມພຣະເຈົ້າ.

ງ. ຫາກດື້ດ້ານໄປຂາບໄຫວ້ພຣະອື່ນພຣະເຈົ້າຈະໂກດຮ້າຍ ແລະທຳລາຍຈົນໝົດ.

ຈ. ໃຫ້ເຮັດແຕ່ສິ່ງທີ່ພຣະເຈົ້າຊົງເຫັນວ່າຖືກຕ້ອງ ເພື່ອທຸກຢ່າງຈະເປັນໄປໂດຍດີ.

4. <u>ໃຫ້ຜູ້ນຶ່ງອ່ານ ພຣະບັນຍັດສອງ 6:20-25</u> (ສອນລູກຫລານ)

ກ. ການທີ່ພຣະເຈົ້າຊົງຊ່ອຍນັ້ນສົມຄວນເວົ້າໃຫ້ລູກຫລານຟັງ.

ຂ. ໂມເຊບອກຄຳເວົ້າໃຫ້ເວົ້າກັບລູກຫລານໃນຂໍ້ 21-25).

ຄ. ກັບຄືນໄປເວົ້າເຣື່ອງຣູບຫລານ, ຫລືລູກເຮົາເອງໃນຕອນຕົ້ນທີ່ເວົ້າກັນ ແລ້ວຖາມນັກຮຽນວ່າ ຕໍ່ໄປນີ້ເຮົາຈະຕ້ອງເວົ້າເຣື່ອງພຣະເຈົ້າຊົງໄຖ່ໃຫ້ລູກຫລານຟັງ ເພື່ອຊ່ອຍລູກຫລານໃຫ້ຮູ້ເຣື່ອງ ຂອງພຣະເຈົ້າແຕ່ຍັງນ້ອຍ, ແລະຍັງເປັນຄຳສັ່ງໃຫ້ເຮົາເວົ້າໃຫ້ລູກຫລານຟັງອີກ.

<u>ຄຳຖາມ:</u> ໃຫ້ໃຊ້ຄຳຖາມໃນບົດຮຽນ.

ສຈ. ທູນພັນ ວົງສຸຣິດທ໌

# ຄຳແນະນຳຄູສອນ
# ບົດຮຽນທີ 12
# ການນະມັສການສມັຍບູຮານ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ພຣະບັດຍັດສອງ 26:1-19
ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້: ພຣະບັດຍັດສອງ 26
ຈຸດສຳຄັນຂອງບົດຮຽນນີ້: ການຖວາຍເປັນພາກສ່ວນນຶ່ງຂອງການນະມັສການ.
ຄຳຖາມເພື່ອການສຳຣວດ: ການນະມັສການທີ່ແທ້ຈິງນັ້ນເປັນແນວໃດ?
ຈຸດປະສົງຂອງບົດຮຽນນີ້: ເພື່ອສຳຣວດການນະມັສການແລ້ວແກ້ໄຂຄວາມບົກຜ່ອງ.

ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ນຳຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

## ບົດນຳ

ແຕ່ລະໂບດຈັດລາຍການໆນະມັສການບໍ່ຄືກັນ, ບາງໂບດຮ້ອງເພງເປັນຊົ່ວໂມງກ່ອນນະມັສການ? ບາງໂບດໂຫ່ຮ້ອງສັຣເສີນອາເລລູຢາ ອາແມນດ້ວຍສຽງດັງ, ບາງໂບດກໍນັ່ງມິດຟັງຢ່າງງຽບໆ, ບາງໂບດກໍເອົາຊາວໜຸ່ມມາຮ້ອງເພງແລະສະແດງການນະມັສການແບບຊາວໜຸ່ມ, ບາງໂບດກໍມີການເທສນາໃຫ້ເດັກນ້ອຍຟັງກ່ອນ, ບາງໂບດກໍວາງຂັນຖວາຍໄວ້ໃກ້ທາງເຂົ້າຫ້ອງນະມັສການ, ບາງໂບດກໍເອົາໂຮງຮຽນວັນອາທິດໄວ້ນຳຫລັງຂອງການເທສນາ. ສລູບແລ້ວແຕ່ລະໂບດກໍມີລາຍການນະມັສການຕາມແບບໃຜລາວ ແຕ່ສິ່ງທີ່ຄືກັນນັ້ນແມ່ນນະມັສການພຣະເຈົ້າອົງດຽວກັນ, ດັ່ງນັ້ນຫາກໂບດເພິ່ນນະມັສການບໍ່ຄືໂບດເຮົາກໍຢ່າໄປວ່າໃຫ້ເພິ່ນ ຫາກພຣະເຈົ້າພໍພຣະທັຍໃຫ້ເພິ່ນນະມັສການໃນແບບນັ້ນເຮົາແມ່ນໃຜຈຶ່ງຈະໄປວ່າເພິ່ນ ຫລືຫາກພຣະເຈົ້າພໍພຣະທັຍໃຫ້ເຮົານະມັສການແບບນີ້ ເຮົາກໍຈະນະມັສການແບບນີ້. ວັນນີ້ເຮົາຈະມາສຶກສາເບິ່ງການນະມັສການຂອງພວກບູຮານ ມີຫຍັງທີ່ເຮົາຈະຕ້ອງຮຽນນຳເພິ່ນບໍ່? ເຮົາຍັງຂາດບ່ອນໃດ? ແລະມີບ່ອນໃດເຮົາຄວນປັບປຸງເຮົາເອງ ເພື່ອຈະເປັນທີ່ພໍພຣະທັຍພຣະເຈົ້າ.

ຂໍໃຫ້ຜູ້ນຶ່ງອ່ານ 26:1-11 ການຮູ້ຈັກຂອບພຣະຄຸນ

ກ. ອິສຣາເອນຖວາຍເພື່ອເປັນການຂອບພຣະຄຸນມີສອງຢ່າງຄື;

1. ຖວາຍເພື່ອຂອບພຣະຄຸນທີ່ໄດ້ມາຢູ່ແຜ່ນດິນໃຫມ່ທີ່ອຸດົມສົມບູນ.

2. ຖວາຍຂອບພຣະຄຸນທີ່ພຣະເຈົ້າອວຍພອນໄຮ່ນາໃຫ້ໄດ້ຮັບຜົນຫລາຍ.

ຂ. ອິສຣາເອນຈົດຈຳພຣະຄຸນພຣະເຈົ້າທີ່ໄດ້ຊ່ອຍໃຫ້ພົ້ນຈາກການເປັນຂ້າທາດທີ່ອີຢິບ (ຂໍ້ 5-10)

ຄ. ອິສຣາເອນມີຄວາມຊົມຊື່ນຍິນດີພໍໃຈໃນຂອງປະທານ. (ພໍໃຈໃນສິ່ງຕົນເອງມີຢູ່)

ງ. ອິສຣາເອນຖວາຍຜົນແຮກທຸກຢ່າງເພື່ອເປັນການນະມັສການທີ່ຄົບຖ້ວນ.

ຈ. ອິສຣາເອນບອກສອນລູກຫລານໃນເຣື່ອງພຣະຄຸນພຣະເຈົ້າ.

<u>ຂໍໃຫ້ຜູ້ນຶ່ງອ່ານ 26:12-15</u> ຜົນເກັບກ່ຽວໃນສາມປີ

ກ. ທຸກສາມປີອິສຣາເອນເອົານຶ່ງສ່ວນສິບຂອງທຸກຢ່າງໄປແຈກຢາຍໃຫ້ຄື;

1. ຄົນເລວີ ຜູ້ມີຫນ້າທີ່ຮັບໃຊ້ໃນພຣະວິຫານ ເພາະຄົນຮັບໃຊ້ໃນພຣະວິຫານບໍ່ມີສັບສົມບັດໃດໆ.

2. ຄົນຕ່າງດ້າວທີ່ເຂົ້າຢູ່ອາສັຍໃນແຜ່ນດິນນັ້ນ.

3. ພວກລູກກຳພ້າ, ສ່ວນຫລາຍແມ່ນລູກທີ່ຂາດພໍ່ເປັນຜູ້ລ້ຽງດູ.

4. ພວກແມ່ຫມ້າຍທີ່ຜົວຕາຍປະແລ້ວຂາດບ່ອນເພິ່ງພາອາສັຍ.

ຂ. ຫລັງຈາກເຮັດແນວນັ້ນແລ້ວອິສຣາເອນກໍຂໍພອນຈາກພຣະເຈົ້າ, ແລະພຣະເຈົ້າກໍອວຍພອນ (ຂໍ້ 14-15)

<u>ຂໍໃຫ້ຜູ້ນຶ່ງອ່ານ 26: 16-19</u> ຊົງເລືອກໄພ່ພົນພິເສດ

1. ສັ່ງໃຫ້ອິສຣາເອນປະຕິບັດຄຳສັ່ງຈົນສຸດຈິດສຸດໃຈ.

2. ອິສຣາເອນສັນຍາຈະເຮັດຕາມກົດບັດຍັດແລະຮີດຄອງປະເພນີທັງຫມົດແຕ່ນີ້ເຂົາຮັບເອົາພຣະເຈົ້າ.

3. ຊົງເລືອກອິສຣາເອນຕາມພຣະສັນຍາທີ່ສັນຍາໄວ້ກັບອັບຣາຮາມ.

4. ຊົງອວຍພອນໂດຍເຮັດໃຫ້ອິສຣາເອນເປັນຊາດໃຫຍ່ກວ່າທຸກຊາດ. (ໃຫຍ່ໄປກວ່າເຈົ້ານາຍເດີ, ເອຢິບ)

5. ອິສຣາເອນຈະເປັນໄພ່ພົນບໍຣິສຸດ. ເພາະວ່າພຣະເຈົ້າຈະຊໍາຣະລ້າງເຂົາ.

<u>ສລຸບ:</u> ແບບແຜນການນະມັສການແຕ່ລະໂບດນັ້ນບໍ່ສຳຄັນ ສິ່ງທີ່ສຳຄັນນັ້ນແມ່ນເຮົາໄດ້ເຮັດຕາມພຣະທັມຂອງພຣະເຈົ້າຫລືບໍ່? ເຮົາໄດ້ນະມັສການພຣະເຈົ້າດ້ວຍຈິດວິນຍານຫລືບໍ່? ເຮົາໄດ້ຖວາຍເພື່ອໂມທະນາພຣະຄຸນຫລືບໍ່? ເຮົາໄດ້ນະມັສການດ້ວຍຈົດຈຳພຣະຄຸນຫລືບໍ່? ເຮົາໄດ້ມີຄວາມຊົມຊື່ນຍິນໃນສິ່ງທີ່ພຣະເຈົ້າປະທານຫລືບໍ່? ເຮົາໄດ້ຖວາຍນຶ່ງສ່ວນສິບເຫມືອນອິສຣາເອນຫລືບໍ່? ເຮົາໄດ້ບອກສອນລູກຫລານໃຫ້ນັບຖືຢຳເກງພຣະເຈົ້າຫລືບໍ່? ຫາກເຮົາບໍ່ໄດ້ເຮັດສິ່ງເຫລົ່ານີ້ ເຮົາກໍຄວນຈະເລີ້ມເຮັດເສັຽ ເພາະວ່າສິ່ງເຫລົ່ານີ້ເປັນສິ່ງທີ່ພຣະເຈົ້າພໍພຣະທັຍໃນການນະມັສການຂອງອິສຣາເອນ ຄືພວກເຖົ້າແກ່ບູຮານໃນສມັຍພຣະຄັມພີເດີມ.

ສຈ. ທູນພັນ ວົງສຸຣິດທ໌

# ບົດແນະນຳຄູສອນ
# ບົດຮຽນທີ 13
# ເຊີນເລືອກຊີວິດ

---

ຂໍ້ພຣະຄຳພີສຳລັບບົດຮຽນນີ້: ພຣະບັດຍັດສອງ 30:11-20
ຂໍ້ພຣະຄຳພີທັງໝົດສຳລັບບົດຮຽນນີ້: ພຣະບັດຍັດສອງ 29-30
ຈຸດສຳຄັນຂອງບົດຮຽນນີ້: ຊົງໃຫ້ໂອກາດເລືອກຊີວິດແລະຄວາມຕາຍ
ຄຳຖາມເພື່ອການສຳຣວດ: ທ່ານຈະເລືອກຊີວິດແນວໃດ?
ຈຸດປະສົງຂອງບົດຮຽນນີ້: ເພື່ອສອນເຮົາໃຫ້ເລືອກຊີວິດທີ່ຈະເຣີນຮຸ່ງເຮືອງ

ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ

- ພຣະຄຳພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.

## ບົດນຳ

ການຕັດສິນໃຈໃນການຍ້າຍບ້ານເຮືອນເປັນສິ່ງໃຫຍ່ໃນການຕັດສິນໃຈຄືກັນ.ຫາກເຮົາຕັດສິນໃຈຍ້າຍຈາກຣັດນີ້ໄປຢູ່ຣັດໃໝ່ແນ່ນອນເຮົາຕ້ອງຄິດຫລາຍມື້ຫລາຍວັນ ແຕ່ລະເທື່ອຕ້ອງສູນເສັຍສິ່ງຂອງໄປຫລາຍຢ່າງ ພ້ອມທັງຕ້ອງເສັຽພີ່ເສັຽນ້ອງໃນຄວາມໃກ້ຊິດຮັກແພງກັນອີກ, ເມື່ອຍ້າຍໄປແລ້ວກໍຕ້ອງໄປເລີ້ມຕົ້ນໃໝ່ທຸກຢ່າງ ບ້ານເຮືອນກໍຕ້ອງຫາໃໝ່, ຖນົນຫົນທາງທີ່ບໍ່ລື້ງເຄີຽກໍຕ້ອງຮຽນໄປຮຽນມາອີກ, ການງານກໍແມ່ນງານໃໝ່. ຢ່າງໃດກໍດີຫາກເຮົາບໍ່ຕັດສິນໃຈຍ້າຍຈາກບ້ານເກົ່າເຮົາກໍຈະບໍ່ໄດ້ບ້ານໃໝ່, ຫາກເຮົາບໍ່ຕັດສິນໃຈຖິ້ມຊີວິດເກົ່າເຮົາກໍຈະບໍ່ໄດ້ຊີວິດໃໝ່ທີ່ດີກວ່າເກົ່າ. ໃນບົດຮຽນນີ້ນີ້ໂມເຊບອກໃຫ້ອິສຣາເອນໃຫ້ປະຕິບັດພຣະບັນຍັດຂອງພຣະເຈົ້າກ່ອນໜ້າເຂົ້າໄປຢູ່ແຜ່ນດິນໃໝ່ ເພື່ອຈະໄດ້ມີຊີວິດທີ່ເໝາະສົມກັບແຜ່ນດິນໃໝ່.

ຂໍໃຫ້ຜູ້ນຶ່ງອ່ານ 30:11-14 ຄຳສັ່ງໃຫ້ເຊື່ອຟັງ

ກ. ໂມເຊກ່າວເຕືອນອິສຣາເອນໃຫ້ຕັ້ງໃຈຟັງເພິ່ນກ່າວພຣະບັນຍັດຂອງພຣະເຈົ້າ (ບໍ່ແມ່ນເພິ່ນເວົ້າເອງ).

ຂ. ພຣະບັນຍັດນີ້ບໍ່ຍາກໃນການປະຕິບັດ. ເພາະວ່າ;

1. ບໍ່ສູງຢູ່ເທິງຟ້າ. (ໝາຍຄວາມວ່າບໍ່ສູງເກີນກວ່າຍື້ເຖິງ).
2. ບໍ່ຢູ່ກາງທະເລ. (ໝາຍຄວາມວ່າບໍ່ໄກເກີນກວ່າຈັບໄດ້).
3. ມັນຢູ່ກັບທ່ານເອງ. (ໝາຍຄວາມວ່າບັນທຶກເປັນເອກະສານ ຫລືພຣະຄຳພີທີ່ທ່ານຈັບຢູ່).
4. ທ່ານສາມາດເຂົ້າໃຈໄດ້ ເພາະເປັນພາສາມະນຸດ (ພາສາຂອງທ່ານເອງ).

ຄ. ຍົກເປັນຂໍ້ອ້າງອີງໃນການງານຕ່າງໆ.

ຂໍໃຫ້ຜູ້ນຶ່ງອ່ານ 30:15-20 ເລືອກເອົາເອງ

ກ. ແຕ້ມຮູບສີ່ຫລ່ຽມສອງອັນ.

1. ຮູບສີ່ຫລ່ຽມທີນຶ່ງແຕ້ມຮູບຕົ້ນໄມ້ຫລາຍຕົ້ນ ທີ່ພຣະເຈົ້າສັ່ງໃຫ້ອາດາມແລະເອວາກິນໄດ້ຫມົດທຸກຕົ້ນ.
2. ຮູບສີ່ຫລ່ຽມທີສອງແຕ້ມຮູບຕົ້ນໄມ້ຕົ້ນດຽວ ແລ້ວຂີດໄຂວ່ຈຽງ ແປວ່າບໍ່ໃຫ້ກິນ.
3. ເປັນຫຍັງອາດາມແລະເອວາຈຶ່ງເລືອກກິນຕົ້ນທີ່ຫ້າມແຕ່ຕົ້ນດຽວນັ້ນ?
4. ພຣະເຈົ້າໃຫ້ເຮົາເຮັດໄດ້ຫລາຍຢ່າງໃນໂລກນີ້ ເພິ່ນຫ້າມແຕ່ນ້ອຍດຽວເປັນຫຍັງເຮົາຈຶ່ງລະເມີດ?

ກ. ແຕ້ມຮູບສີ່ຫລ່ຽມອີກສອງອັນ.

1. ຮູບສີ່ຫລ່ຽມທີນຶ່ງຂຽນວ່າ  ຄວາມຮັ່ງມີແລະຊີວິດ
2. ຮູບສີ່ຫລ່ຽມທີສອງຂຽນວ່າ ການທຳລາຍແລະຄວາມຕາຍ
3. ໂມເຊບອກໃຫ້ອິສຣເອນເລືອກເອົາຕາມໃຈຊອບຫລັງເພິ່ນອະທິບາຍ ຄວາມຮັ່ງມີແລະຊີວິດ ແລະ ການທຳລາຍແລະຄວາມຕາຍ.
4. ໂມເຊຊັກຊວນໃຫ້ເລືອກຄວາມຮັ່ງມີແລະຊີວິດ.

ຄຳຖາມ:

1. ເປັນຫຍັງຄົນເຮົາຈຶ່ງມັກເລືອກຜິດ?

2. ເຮັດແນວໃດເຮົາຈຶ່ງຈະເລືອກຖືກ?

3. ເຣື່ອງຂອງອາດາມແລະເອວາສອນຫຍັງທ່ານແດ່?

4. ເຣື່ອງຂອງອິສຣາເອນເລືອກຊີວິດຮັ່ງມີ ແລະຊີວິດທີ່ຖືກທຳລາຍທ່ານມີຄວາມເຫັນແນວໃດ?

5. ຄຳວ່າ "ຖ້າວ່າທ່ານເຮັດຕາມ ພຣະບັນຍັດຂອງພຣະຜູ້ເປັນເຈົ້າ  ທີ່ຂ້າພະເຈົ້າໃຫ້ໃນມື້ນີ້ ຄືວ່າຮັກແລະເຊື່ອຟັງພຣະອົງພ້ອມທັງປະຕິບັດຕາມກົດບັນຍັດພຣະທຳ ແລະຮີດຄອງປະເພນີທັງຫມົດ    ທ່ານກໍຈະເຮີນຮຸ່ງເຮືອງ ແລະກາຍເປັນຊົນຊາດໃຫຍ່ ພຣະຜູ້ເປັນເຈົ້າຈະຊົງ ອວຍພອນທ່ານໃນແຜ່ນ ດິນທີ່ເຂົ້າຍຶດຄອງ" (ຂໍ້ 16) ສາມາດ ປ່ຽນແປງຊີວິດທ່ານແນວໃດໃນຖານະທ່ານກໍຢູ່ໃນແຜ່ນດິນໃຫມ່?

ສຈ. ທູນພັນ ວົງສຸຣິດທ໌

# ບົດແນະນຳການສິດສອນ
# ບົດຮຽນວັນການຄືນພຣະຊົນ
# ຕອບສນອງຕໍ່ການຄືນພຣະຊົນຂອງພຣະເຢຊູ

---

ຂໍ້ພຣະຄຳພີສຳລັບບົດຮຽນ: ມັດທາຍ 28:1-10, 16-20

ຂໍ້ພຣະຄຳພີສຳລັບເບື້ອງຫລັງ: ມັດທາຍ 28

ຈຸດສຳຄັນຂອງບົດຮຽນນີ້: ພວກເຮົາຕອບສນອງຕໍ່ການຄືນພຣະຊົນຂອງພຣະເຢຊູດ້ວຍຄວາມປິຕິຍິນດີ, ດ້ວຍການນະມັສການ, ແລະດ້ວຍການເຊື່ອຟັງຂໍ້ຄຳສັ່ງຂອງພຣະອົງໃຫ້ໄປເຮັດໃຫ້ທຸກຄົນເປັນລູກສິດຂອງພຣະອົງ.

ຄຳຖາມເພື່ອການສຳຫລວດ: ພວກເຮົາໄດ້ສະແດງອອກໃຫ້ຄົນອື່ນເຫັນວ່າພວກເຮົາເຊື່ອໃນການຄືນພຣະຊົນຂອງພຣະເຢຊູຫລາຍປານໃດ?

ຈຸດປະສົງຂອງບົດຮຽນນີ້: ເພື່ອໃຫ້ຂ້າພະເຈົ້າຕັດສິນໃຈວ່າ ມີຫລາຍວິທີທາງທີ່ຂ້າພະເຈົ້າຈະຕອບສນອງຕໍ່ຂ່າວປະເສີດໃນການຄືນພຣະຊົນຂອງອົງພຣະເຢຊູ.

## ແຜນການສິດສອນ

### ຊີວິດສະພາບຕົວຈິງ

1. ໃຫ້ຂຽນຫົວຂໍ້ຂອງບົດຮຽນຈາກ ຄູ່ມືຂອງພວກສະມາຊິກຫ້ອງ ໃສ່ເທິງກະດານ ຫລືແຜ່ນເຈັ້ຽແຂງ.
   (1) ພຣະເຈົ້າຂ້າ, ຂໍຊົງໂຜດໃຫ້ຊີວິດຂອງຂ້ານ້ອຍເຕັມລົ້ນໄປດ້ວຍຄວາມຍິນດີ (28:1-10)
   (2) ພຣະເຈົ້າຂ້າ, ຂໍຊົງໂຜດໃຫ້ຊີວິດຂອງຂ້ານ້ອຍເຕັມລົ້ນໄປດ້ວຍການນະມັສການ (28:16-18)
   (3) ພຣະເຈົ້າຂ້າ, ຂໍຊົງໂຜດໃຫ້ຊີວິດຂອງຂ້ານ້ອຍເຕັມລົ້ນໄປດ້ວຍການເຊື່ອຟັງ (28:19-20)

ໃຫ້ນຳເອົາຮູບໂລກຕັ້ງໂຕະທີ່ປິ່ນໄປມາໄດ້ມາຫ້ອງຮຽນ. ໃຫ້ເລີ້ມຫ້ອງຮຽນໂດຍປິ່ນໜ່ວຍໂລກນັ້ນແລະຖາມວ່າ, ພາກສ່ວນໃດໃນໂລກນີ້ຊຶ່ງທ່ານຈະຮັບຜິດຊອບເຮັດໃຫ້ຄົນໃນພາກສ່ວນນັ້ນເປັນລູກສິດ? ໃຫ້ພວກສະມາຊິກຫ້ອງຮຽນເອົາໄປຄຶດ ໃນຂະນະທີ່ພວກເຮົາພາກັນສຶກສາບົດຮຽນຢູ່.

ໃຫ້ຖາມວ່າ, ພວກເຮົາຮູ້ອັນໃດແດ່ກ່ຽວກັບຜູ້ຂຽນຄົນນີ້ທີ່ມີຊື່ວ່າ ມັດທາຍ? (ລາວເປັນຜູ້ນຶ່ງໃນຈຳນວນລູກສິດສິບສອງຄົນ.) ລາວມີຈຸດປະສົງອັນໃດຈຶ່ງຂຽນພຣະທັມມັດທາຍນີ້? (ລາວຂຽນຂຶ້ນມາເພື່ອຊາວຢິວ. ລາວຢາກໃຫ້ພວກເຂົາຮູ້ວ່າພຣະເຢຊູຊົງເປັນພຣະເມຊີອານທີ່ພວກເຂົາໄດ້ຄອຍຖ້າເປັນເວລາດົນນານມາແລ້ວ.)

### ສຶກສາບົດຮຽນ

2. ໃຫ້ວ່າຢ່າງນີ້, ວັນນີ້ເປັນເທສການຂອງວັນຄືນພຣະຊົນຂອງພຣະເຢຊູ, ພວກເຮົາຈະມາເບິ່ງເຣື່ອງການຄືນພຣະຊົນຂອງພຣະອົງໃນພຣະທັມມັດທາຍ. ໃຫ້ອ່ານມັດທາຍ 28:19-20. ຊີ້ໃຫ້ພວກເຂົາເຫັນວ່າປົກກະຕິແລ້ວພວກເຮົາຈະບໍ່ສຶກສາເຣື່ອງການຄືນພຣະຊົນຂອງພຣະເຢຊູໂດຍໃຊ້ພຣະທັມຕອນນີ້. ໃຫ້ອະທິບາຍວ່າ ນີ້ແມ່ນຈຸດທີ່ພວກເຮົາຈະເລີ້ມບົດຮຽນຂອງການຄືນພຣະຊົນຂອງພຣະອົງ.

3. ໃຫ້ຊີ້ແນະໄປຫາຫົວຂໍ້ທີນຶ່ງຂອງບົດຮຽນ. ຂໍຮ້ອງໃຫ້ຜູ້ນຶ່ງອ່ານມັດທາຍ 28:1-10. ໃຫ້ຖາມວ່າຜູ້ຍິງທີ່ມາຮອດອຸບໂມງນັ້ນແມ່ນໃຜ? ພວກເຮົາເຄີຍໄດ້ຍິນເຣື່ອງລາວຂອງພວກເຂົາມາກ່ອນນັ້ນຢູ່ບ່ອນໃດ? ໃຫ້ຜູ້ນຶ່ງອ່ານມັດທາຍ 27:56 ແລະ 28:1. ໃຫ້ສົນທະນາກັນ ການປ່ຽນແປງກ່ຽວກັບຖານະຂອງພວກຜູ້ຍິງເຫລົ່ານີ້. ກ່ອນນັ້ນຄຳພຍານຂອງພວກເຂົາບໍ່ມີໃຜຮັບຮູ້ເປັນທາງການ. ແຕ່ດຽວນີ້ ພວກເຂົາເປັນພຍານຜູ້ທຳອິດຂອງການຄືນພຣະຊົນຂອງອົງພຣະເຢຊູ. ພວກເຂົາເປັນຜູ້ບອກພວກສາວົກຂອງພຣະອົງ. ໃຫ້ອ່ານພຣະທັມ ຄາລາເຕັຽ 3:28. ໃຫ້ບອກສະມາຊິກຫ້ອງວ່າ, ຕາມຄວາມຈິງແລ້ວ ເທວະດາກິ້ງກ້ອນຫີນອອກຈາກປາກອຸບໂມງ. ບໍ່ແມ່ນໃຫ້ພຣະເຢຊູອອກມາ. ພຣະອົງສະເດັດອອກມາກ່ອນແລ້ວ. ກ້ອນຫີນຖືກກິ້ງອອກກໍເພື່ອໃຫ້ພວກຜູ້ຍິງໄດ້ເຂົ້າໄປ. ໃຫ້ອ່ານຂໍ້ຄວາມຈາກຄູ່ມືບົດຮຽນຂອງສະມາຊິກຫ້ອງ, "ແຜ່ນດິນຫວັ່ນໄຫວແລະການຊົງປະກົດຂອງເທວະດາເຮັດໃຫ້ຄົນເຝົ້າຍາມອຸບໂມງນັ້ນຢ້ານແລະກາຍເປັນເຫມືອນຄົນຕາຍ ຜູ້ຍາມຄົນຕາຍກາຍເປັນເຫມືອນຄົນຕາຍໃນຂນະທີ່ຜູ້ຕາຍກັບກາຍຄືນມາມີຊີວິດ." ໃຫ້ກ່າວເຖິງຄວາມຮູ້ສຶກຂອງພວກຜູ້ຍິງຈາກຄວາມຢ້ານກາຍມາເປັນຄວາມຍິນດີຫລາຍແລະພວກເຂົາໄດ້ຂາບລົງນະມັສການພຣະອົງ.

4. ໃນພາກທີສອງຂອງຫົວຂໍ້ນີ້ເອີ້ນໃຫ້ຕັ້ງຫມົກຕັ້ງໃຈ "ນະມັສການ." ຂໍຮ້ອງໃຫ້ຜູ້ນຶ່ງອ່ານມັດທາຍ 28:16-18 ໃຫ້ດັງໆ. ໃຫ້ຖາມສະມາຊິກຫ້ອງວ່າ ພວກເຂົາຮູ້ເຣື່ອງລາວພື້ນຖານອັນໃດແດ່ຂອງແຂວງຄາລີເລ. ຊີ້ໃຫ້ພວກເຂົາເຫັນວ່າ ພວກລູກສິດຂອງພຣະເຢຊູຖືກສັ່ງໃຫ້ໄປລໍຖ້າພຣະອົງຢູ່ທີ່ນັ້ນ. ທີ່ນັ້ນເປັນບ່ອນພຣະອົງຊົງໄປພັກຜ່ອນ. ການປະກາດຂອງພຣະອົງຊົງເລີ້ມຢູ່ທີ່ນັ້ນ. ແຂວງຄາລີເລເປັນບ່ອນຂອງຄົນຕ່າງຊາດອາສັຍຢູ່ດ້ວຍ. ພຣະອົງຊົງສັ່ງໃຫ້ພວກລູກສິດຂອງພຣະອົງໄປຫາຄົນຕ່າງຊາດດ້ວຍເຣື່ອງຄຳພຍານຂອງເຂົາ. ໃຫ້ກ່າວຂໍ້ຄວາມຈາກ ຄູ່ມືບົດຮຽນຂອງສະມາຊິກຫ້ອງ, "ການນະມັສການດ້ວຍຄວາມຈິງໃຈຈະຕ້ອງມີຜົນ ຄືຍອມອອກໄປຕາມບັນຊາສັ່ງ." ໃຫ້ຖາມວ່າ, ການນະມັສການຂອງທ່ານໃນເທສການວັນຄືນພຣະຊົນໄດ້ສັ່ງໃຫ້ທ່ານໄປກ່າວເຣື່ອງຄຳພຍານຂອງທ່ານຢູ່ບ່ອນໃດ? ຈົ່ງສັງເກດເບິ່ງໂລກນີ້ເປັນທົ່ງຂອງການປະກາດພວກເຮົາ.

5. ພາກທີສາມຂອງຫົວຂໍ້ບົດຮຽນແມ່ນມາຈາກມັດທາຍ 28:19-20. ໃຫ້ກ່າວວ່າ, ການເຊື່ອຟັງຂອງພວກເຮົາຕໍ່ການຄືນພຣະຊົນມີຄວາມຫມາຍວ່າ ພວກເຮົາ "ເຮັດໃຫ້ຄົນອື່ນເປັນລູກສິດ" (ມັດທາຍ 28:19). ການເຮັດໃຫ້ຄົນອື່ນເປັນລູກສິດຂອງພຣະເຢຊູ ແມ່ນຫົວໃຈຂອງການຊົງສັ່ງຂອງພຣະອົງ. ພວກເຮົາເຮັດໃຫ້ຄົນອື່ນເປັນລູກສິດແມ່ນພວກເຮົາໄປບອກເຣື່ອງຄຳພຍານຂອງພວກເຮົາໃຫ້ຄົນອື່ນຟັງ. "ການບັບຕິສະມາ" ແມ່ນຂັ້ນຕອນຕໍ່ໄປ. ພວກເຮົາມີຄວາມຮູ້ສຶກເສັຽໃຈ ເມື່ອພວກເຮົາປະລູກສິດໄປໃນຕອນນີ້. ຂັ້ນທີສາມ ແມ່ນ "ສັ່ງສອນ." ພວກເຮົາເອົາອັນໃດມາສອນເຂົາ? ພວກເຮົາສອນເຂົາໃຫ້ເຊື່ອຟັງພຣະເຢຊູ, ໃຫ້ຕິດຕາມພຣະອົງ, ແລະໃຫ້ໄປເຮັດໃຫ້ຄົນອື່ນຕໍ່ໄປໃຫ້ເປັນລູກສິດຂອງພຣະອົງ.

## ຫມູນໃຊ້ໃນການກະທຳ

6. ການບັນຊາສັ່ງແມ່ນ "ຈົ່ງໄປ ຈົ່ງເຮັດໃຫ້ຄົນທຸກຊາດເປັນລູກສິດ" (28:19). ໃຫ້ຖາມວ່າ, "ພາກສ່ວນໃດຂອງໂລກທີ່ທ່ານໄດ້ຮັບຜິດຊອບ? ຄຳວ່າ "ທຸກຊາດ" ທ່ານຄິດວ່າມີຄວາມຫມາຍວ່າຢ່າງໃດ? ພວກເຮົາຈະໄປຫາຄົນທຸກຊາດໄດ້ຢ່າງໃດ?

໗. ຫມູນໃຈໃຫ້ສະມາຊິກຫ້ອງຄິດເຖິງຄົນໃດຄົນນຶ່ງທີ່ເຂົາມີຫນ້າທີ່ຮັບຜິດຊອບທີ່ຈະເຮັດໃຫ້ຄົນນັ້ນເປັນລູກສິດ. ໃຫ້ເວົ້າວ່າ, ໃຫ້ພິຈາຣະນາເບິ່ງວ່າ ທ່ານສາມາດຈະຊ່ອຍຄົນໃດຄົນນຶ່ງໃຫ້ເຕີບໃຫຍ່ໃນປີຫນ້າມາຮອດ.

<u>ໃນຂນະທີ່ພວກເຮົາຊ່ອຍຄົນອື່ນ ພວກເຮົາກໍຈະເຕີບໃຫຽ່ໃນການເປັນລູກສິດດ້ວຍ</u>.   ໃຫ້ນຳພາໃນການອະທິຖານ ຂໍໃຫ້ພວກເຂົາໄດ້ຮັບປະສົບການ ດ້ວຍຄວາມຍິນດີ, ການນະມັສການ, ແລະການເຊື່ອຟັງໃນເທສການວັນຄືນພຣະ ຊົນນີ້ດ້ວຍ.

ສຈ. ບຸນເຮົ້ງ ພົງປຣະພັນ